# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee

**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ................................01 - 06
**II.** ການເຄື່ອນໄຫວຂອງ ການນຳຂັ້ນສູງ........................................................................07
**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ...............................................08 - 17

ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ເດືອນມິຖຸນາ 2026

ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ
**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 03 ມິຖຸນາ 2026, ຢູ່ນະຄອນຫຼວງຮ່າໂນ້ຍ, ສະຫາຍ ໂຕ ເລີມ, ເລຂາທິການໃຫຍ່, ປະທານປະເທດ ສສ ຫວຽດນາມ ໄດ້ເປັນປະທານຮ່ວມເຮັດວຽກກັບຄະນະຈັດຕັ້ງສູນກາງພັກ ກ່ຽວກັບ ຄວາມສຳຄັນຂອງວຽກງານຈັດຕັ້ງ, ກໍ່ສ້າງພັກ ຕາມຈິດໃຈຂອງມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກ. ສະຫາຍ ໂຕເລີມ ໄດ້ເນັ້ນໜັກວ່າ ການສ້າງພັກໃນຍຸກໃໝ່ບໍ່ພຽງແຕ່ກອມເອົາການສ້າງພັກທີ່ປອດໃສ ແລະ ເຂັ້ມແຂງ ເທົ່ານັ້ນ, ແຕ່ຍັງກອມເອົາການສ້າງພັກ ທີ່ມີ ຄວາມກ້າຫານ, ສະຕິປັນຍາ, ກຽດສັກສີ, ຄວາມສາມາດ ແລະ ວິທີການນຳພາທີ່ເໝາະສົມ ເພື່ອນຳພາປະເທດໃນຍຸກໃໝ່; ບັນຫາທີ່ສຳຄັນໃນປັດຈຸບັນ ແມ່ນການປ່ຽນໃໝ່ວິທີການນຳພາຂອງພັກຢ່າງແຂງແຮງ ນັບແຕ່ຂັ້ນສູນກາງຮອດທ້ອງຖິ່ນ; ວຽກງານບຸກຄະລາກອນ ແມ່ນມີຄວາມສຳຄັນຫຼາຍ ເພື່ອຈະເປັນຜູ້ຂັບເຄື່ອນ ບັນດາເປົ້າໝາຍທີ່ວາງໄວ້ ຊຶ່ງບຸກຄະລາກອນຕ້ອງມີຈັນຍາບັນ, ມີຄວາມສາມາດ, ຄວາມຮັບຜິດຊອບ ແລະ ຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ. ມີຄຸນທາດການເມືອງໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດຜ່ອງໃສ ແລະ ວິຖີຊີວິດທີ່ເປັນແບບຢ່າງ, ມີ ຈິນຕະນາການຍຸດທະສາດ, ຄວາມສາມາດບໍລິຫານທີ່ທັນສະໄໝ, ຄວາມສາມາດໃນການຫັນປ່ຽນດິຈິຕອນ, ຄວາມສາມາດໃນການແກ້ໄຂບັນຫາ, ຄວາມສາມາດໃນການສົນທະນາກັບປະຊາຊົນ ແລະ ຈິດໃຈທີ່ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບຕໍ່ຜົນປະໂຫຍດສ່ວນລວມ.

ວັນທີ 15 ມິຖຸນາ 2026, ທີ່ສຳນັກງານສູນກາງພັກ, ສະຫາຍ ໂຕ ເລີມ, ເລຂາທິການໃຫຍ່, ປະທານປະເທດ ໄດ້ເປັນປະທານກອງປະຊຸມ ເຮັດວຽກກັບຂະແໜງການສຶກສາ ແລະ ກໍ່ສ້າງ ໃນການກະກຽມໃຫ້ແກ່ສົກຮຽນປີ 2026-2027 ແລະ ໝາກຜົນຂອງການຈັດຕັ້ງປະຕິບັດມະຕິເລກທີ 71-NQ/TW, ລົງວັນທີ 22 ສິງຫາ 2025, ຂອງກົມການເມືອງສູນກາງພັກ ກ່ຽວກັບຄວາມກ້າວໜ້າໃນການພັດທະນາຂົງເຂດການສຶກສາ ແລະ ກໍ່ສ້າງ. ສະຫາຍ ໂຕ ເລີມ ໄດ້ກ່າວວ່າ ຜ່ານໄລຍະ 10 ເດືອນ ຂອງການຈັດຕັ້ງປະຕິບັດມະຕິດັ່ງກ່າວ, ທົ່ວທັງລະບົບການເມືອງ ໄດ້ເຫັນການປ່ຽນແປງທາງບວກໃນດ້ານຄວາມຮັບຮູ້, ແນວຄິດການນຳພາ, ທິດທາງ ແລະ ການຈັດຕັ້ງປະຕິບັດ. ສະພາແຫ່ງຊາດ, ລັດຖະບານ, ບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ, ໂດຍສະເພາະ ແມ່ນກະຊວງສຶກສາ ແລະ ກໍ່ສ້າງ ໄດ້ມີຄວາມພະຍາຍາມຫຼາຍຢ່າງ ເພື່ອປັບປຸງສະຖາບັນ ແລະ ນະໂຍບາຍ, ລະດົມຊັບພະຍາກອນ, ສຸມໃສ່ການແກ້ໄຂຂໍ້ຈຳກັດຕ່າງໆ ແລະ ຄ່ອຍໆສ້າງຄວາມກ້າວໜ້າ ໃນການພັດທະນາການສຶກສາ ແລະ ກໍ່ສ້າງ. ພ້ອມກັນນັ້ນ, ສະຫາຍ ໂຕ ເລີມ ໄດ້ຮຽກຮ້ອງໃຫ້ລັດຖະບານອອກນະໂຍບາຍຢ່າງວ່ອງໄວ ໃນການຫັນອາຄານ ແລະ ສຳນັກງານຂອງລັດ ທີ່ເກີນຄວາມຕ້ອງການ ໃຫ້ກາຍເປັນສະຖານທີ່ສຶກສາ ແລະ ໂຮງໝໍ ເພື່ອບໍ່ໃຫ້ອາຄານຊຸດໂຊມ ແລະ ຊ່ວຍແກ້ໄຂບັນຫາການຈັດສັນສະຖານທີ່ບໍ່ພຽງພໍ ໃນການຮ່ຳຮຽນ-ຈັດກິດຈະກຳຕ່າງໆຂອງເດັກ ແລະ ສະຖານທີ່ກວດ-ປິ່ນປົວສຸຂະພາບຂອງປະຊາຊົນ.

ວັນທີ 18 ມິຖຸນາ 2026, ຄະນະຊີ້ນຳສູນກາງ ໄດ້ດຳເນີນກອງປະຊຸມ ຄັ້ງທີ 30 ກ່ຽວກັບການປ້ອງກັນ ແລະ ຕ້ານການສໍ້ລາດບັງຫຼວງ, ຟຸມເຟືອຍ ແລະ ສິ່ງຫຍໍ້ທໍ້ ໂດຍການເປັນປະທານຂອງ ສະຫາຍ ໂຕ ເລີມ, ເລຂາທິການໃຫຍ່, ປະທານປະເທດ, ປະທານຄະນະຊີ້ນຳຂັ້ນສູນກາງ ກ່ຽວກັບວຽກງານດັ່ງກ່າວ; ກອງປະຊຸມຄັ້ງນີ້ ໄດ້ປະກອບຄຳຄິດເຫັນຕໍ່ຜົນສຳເລັດຂອງວຽກງານໃນ 06 ເດືອນຕົ້ນປີ 2026 ແລະ ໜ້າທີ່ຈຸດສຸມໃນ 06 ເດືອນທ້າຍປີ 2026. ນັບແຕ່ຕົ້ນປີ 2026 ເຖິງປັດຈຸບັນ, ຄະນະຊີ້ນຳຂັ້ນສູນກາງ ໄດ້ຊີ້ນຳການຫັນເປັນອັນລະອຽດ, ບູລະນາການບັນດາທິດນຳ, ກົນໄກ, ນະໂຍບາຍ, ກົດໝາຍ ທີ່ເປັນພື້ນຖານ; ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ໄດ້ປະກາດໃຊ້ ມະຕິຕົກລົງ, ຄຳສັ່ງ, ຂໍ້ກຳນົດ, ຫຼາຍກວ່າ 30 ສະບັບ ກ່ຽວກັບວຽກງານກໍ່ສ້າງພັກ, ລະບອບການເມືອງ, ການພັດທະນາເສດຖະກິດ-ສັງຄົມ; ສະພາແຫ່ງຊາດ, ລັດຖະບານ ໄດ້ຊີ້ນຳ ກວດກາຄືນ, ປັບປຸງເພີ່ມເຕີມ, ປະກາດໃຊ້ ເອກະສານນິຕິກຳ ຫຼາຍກວ່າ 300 ສະບັບ ເພື່ອໃຫ້ໄປຕາມບັນດາທິດນຳຂອງພັກ; ສຸມໃສ່ກວດກາ, ແກ້ໄຂບັນດາແຜນການ, ໂຄງການຫຼ້າຊ້າ, ແກ່ຍາວເວລາ ມີທ່າອຽງສ້າງຄວາມເສຍຫາຍ ແລະ ສິ້ນເປືອງ, ບັນຫາທີ່ດິນ ແລະ ອາຄານ ພາຍຫຼັງມີການສັບຊ້ອນກົງຈັກລັດ; ສຸມໃສ່ກວດກາ, ຕິດຕາມ, ກວດສອບ, ກວດກາບັນຊີ, ສືບສວນ, ແກ້ໄຂຢ່າງຂາດຕົວບັນດາຄະດີ ສໍ້ລາດບັງຫຼວງ, ຟຸມເຟືອຍ, ຫຍໍ້ທໍ້ ຊຶ່ງນັບແຕ່ຕົ້ນປີມາເຖິງປັດຈຸບັນ ຄະນະພັກ, ຄະນະກວດກາຂັ້ນຕ່າງໆ ໄດ້ປະຕິບັດວິໄນຕໍ່ 65 ການຈັດຕັ້ງພັກ ແລະ ສະມາຊິກພັກ 3,375 ສະຫາຍ, ໃນນັ້ນ ລວມມີພະນັກງານທີ່ຂຶ້ນກັບສູນກາງຄຸ້ມຄອງ 02 ສະຫາຍ.

**2) ພັກກອມມູນິດຈີນ**

ໃນວັນທີ 08-09 ມິຖຸນາ 2026, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປ ຈີນ ໄດ້ຢ້ຽມຢາມລັດຖະກິດ ຢູ່ ສປປ ເກົາຫຼີ ໃນຮອບ 07 ປີ (ນັບແຕ່ປີ 2019) ແລະ ເປັນການຢ້ຽມຢາມຕ່າງປະເທດຄັ້ງທຳອິດ ໃນປີ 2026 ຊຶ່ງຖືກກັບໂອກາດຄົບຮອບ 65 ປີ ແຫ່ງການລົງນາມ "ສົນທິສັນຍາ ມິດຕະພາບ, ການຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງ ຈີນ-ສປປ ເກົາຫຼີ". ສະຫາຍ ສີ ຈິ້ນຜິງ ໄດ້ແລກປ່ຽນຄວາມເຫັນຢ່າງເລິກເຊິ່ງກັບ ສະຫາຍ ກິມ ເຈີງອຸນ, ໂດຍໄດ້ສະເໜີ 4 ຂໍ້ ກ່ຽວກັບ ການຂະຫຍາຍການພົວພັນ ລະຫວ່າງສອງຝ່າຍ ຄື: 1) ສືບຕໍ່ການໄປມາຫາສູ່ກັນ ລະຫວ່າງ ການນຳຂັ້ນສູງ ໃນການຊີ້ນຳ-ນຳພາ, ສ້າງພື້ນຖານຂອງການໄວ້ເນື້ອເຊື່ອໃຈກັນທາງການເມືອງ ໃຫ້ໝັ້ນຄົງຍິ່ງຂຶ້ນ; 2) ຖືເອົາການສ້າງຄວາມສຸກໃຫ້ແກ່ປະຊາຊົນເປັນເປົ້າໝາຍ, ຍົກສູງລະດັບການຮ່ວມມືທີ່ຕິດແທດກັບຕົວຈິງ; 3) ຍຶດຖືເອົາມິດຕະພາບ ລະຫວ່າງສອງຝ່າຍ ເປັນກຳລັງແຮງ, ເຊື່ອມສານຈິດໃຈຂອງປະຊາຊົນໃຫ້ສະໜິດ ແໜ້ນຍິ່ງຂຶ້ນ; 4) ຍຶດໝັ້ນ ທັດສະນະທີ່ຍຸດຕິທຳ ແລະ ເປັນທຳ, ເຮັດໃຫ້ການປະສານງານດ້ານຍຸດທະສາດມີເນື້ອໃນອຸດົມສົມບູນກວ່າເກົ່າ. ສ່ວນ ສະຫາຍ ກິມ ເຈີງ ອຸນ ຍິນດີຈະເພີ່ມທະວີການຮ່ວມມືກັບ ສປ ຈີນ ເພື່ອຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືໃນຂົງເຂດທີ່ກວ້າງຂວາງ ເຊັ່ນ: ເສດຖະກິດການຄ້າ, ພື້ນຖານໂຄງລ່າງ, ວິທະຍາສາດ-ເຕັກໂນໂລຊີ, ການສຶກສາ ແລະ ວັດທະນະທຳ ໃຫ້ໄດ້ຮັບການພັດທະນາໃໝ່ ໃນຊຸມປີຕໍ່ໜ້ານີ້, ສປປ ເກົາຫຼີ ຍາມໃດກໍ່ເດັດດ່ຽວສະໜັບສະໜູນນະໂຍບາຍຂອງ ສປ ຈີນ ແລະ ຫຼັກການຈີນດຽວ.

ວັນທີ 15 ມິຖຸນາ 2026, ກອງປະຊຸມສຳມະນາວຽກງານກໍ່ສ້າງພັກທົ່ວປະເທດຈີນ ໄດ້ຈັດຂຶ້ນ ຢູ່ນະຄອນຫຼວງປັກກິ່ງ. ກອງປະຊຸມ ໄດ້ເນັ້ນໜັກແນວຄິດໃນການກໍ່ສ້າງພັກຂອງ ສະຫາຍ ສີ ຈິ້ນຜິງ ທີ່ເປັນຫຼັກການພື້ນຖານ ໃນການເພີ່ມທະວີການກໍ່ສ້າງພັກໃນຍຸກໃໝ່. ພ້ອມທັງໄດ້ລະບຸຢ່າງຈະແຈ້ງວ່າ: ການຍຶດໝັ້ນການນຳພາຂອງພັກ ແມ່ນລັກສະນະພິເສດທີ່ແທ້ຈິງທີ່ສຸດຂອງສັງຄົມນິຍົມ ທີ່ມີສີສັນພິເສດຂອງຈີນ, ຍຶດໝັ້ນການນຳພາຢ່າງລວມສູນ ແລະ ເປັນເອກະພາບຂອງພັກ, ຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານ, ຍຶດໝັ້ນບໍ່ຫຼົງລືມອຸດົມການແຕ່ຫົວທີ ແລະ ຈົດຈຳພາລະກິດ, ຖືເອົາການກໍ່ສ້າງທາງການເມືອງຂອງພັກ, ຍຶດໝັ້ນການຝຶກຝົນຫຼໍ່ຫຼອມທາງຈິດໃຈ ດ້ວຍທິດສະດີປະດິດສ້າງໃໝ່ຂອງພັກ, ຍຶດໝັ້ນການຫຼໍ່ຫຼອມສະຕິພັກທີ່ເຂັ້ມແຂງ, ລະບົບການຈັດຕັ້ງທີ່ໂລ່ງລ່ຽນ, ກໍ່ສ້າງຖັນແຖວພະນັກງານທີ່ມີຄຸນທາດການເມືອງສູງ ແລະ ສາມາດຮັບໜ້າທີ່ອັນໜັກແໜ້ນ ໃນການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງຊົນຊາດ, ຍຶດໝັ້ນກົນໄກໄລຍະຍາວ ໃນການຊຸກຍູ້ການກໍ່ສ້າງແບບແຜນຢ່າງເປັນປົກກະຕິ, ຄຸ້ມຄອງທົ່ວພັກດ້ວຍລະບຽບວິໄນພັກທີ່ເຂັ້ມງວດ, ການສະກັດກັ້ນການສໍ້ລາດບັງຫຼວງຢ່າງເປັນເອກະພາບກັນ, ການຄຸ້ມຄອງພັກຕາມລະບຽບການ ແລະ ລະບຽບວິໄນ, ການຈັດຕັ້ງປະຕິບັດໜ້າທີ່ການເມືອງໃນການຄຸ້ມຄອງພັກ ເຊິ່ງມີເນື້ອໃນທີ່ອຸດົມສົມບູນ ແລະ ມີລະບົບທີ່ເຂັ້ມງວດ.

ວັນທີ 16 ມິຖຸນາ 2026, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປ ຈີນ ໄດ້ຕ້ອນຮັບທ່ານ ມິນ ອອງ ລາຍ, ປະທານາທິບໍດີມຽນມາ ໃນໂອກາດຢ້ຽມຢາມລັດຖະກິດ ຢູ່ ນະຄອນຫຼວງປັກກິ່ງ, ສປ ຈີນ. ສະຫາຍ ສີ ຈິ້ນຜິງ ໄດ້ກ່າວວ່າ: ຈີນ ແລະ ມຽນມາ ມີມິດຕະພາບທີ່ເລິກເຊິ່ງຮ່ວມກັນ, ຈີນ ສະໜັບສະໜູນລັດຖະບານມຽນມາຊຸດໃໝ່ ໃນການວາງແຜນການພັດທະນາ ແລະ ຄວາມໝັ້ນຄົງ, ຊອກຫາເສັ້ນທາງການພັດທະນາທີ່ຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງຂອງປະເທດຕົນ. ຈີນ ຍິນດີຮ່ວມກັບມຽນມາ ສ້າງຄູ່ຮ່ວມຊາຕາກຳ ຈີນ-ມຽນມາ ທີ່ມີມິດຕະພາບ ແລະ ຄວາມໄວ້ເນື້ອເຊື່ອໃຈ ເຊິ່ງກັນ ແລະ ກັນ ທາງດ້ານການເມືອງ, ເສດຖະກິດ, ຄວາມໝັ້ນຄົງ ແລະ ວັດທະນະທຳ ທ່າມກາງສະຖານະການສາກົນທີ່ຜັນແປ ເພື່ອນຳເອົາຄວາມຜາສຸກມາໃຫ້ແກ່ປະຊາຊົນສອງປະເທດ. ຈີນ ຍິນດີຈະເພີ່ມການສະໜັບສະໜູນມຽນມາ ດຳເນີນການຟື້ນຟູປະເທດ ທີ່ໄດ້ຮັບຄວາມເສຍຫາຍຈາກໄພພິບັດແຜ່ນດິນໄຫວ. ສອງຝ່າຍ ຈະສືບຕໍ່ປາບປາມຢ່າງເຂັ້ມງວດ ການພະນັນທາງອອນລາຍ, ການຫຼອກຫຼວງທາງໂທລະສັບ, ການຄ້າຂາຍຢາເສບຕິດ ແລະ ການເຄື່ອນໄຫວກໍ່ອາຊະຍາກຳອື່ນໆ ເພື່ອປົກປ້ອງຜົນປະໂຫຍດ ແລະ ຄວາມປອດໄພຂອງປະຊາຊົນສອງປະເທດ ຢ່າງແທ້ຈິງ. ທ່ານ ມິນ ອອງ ລາຍ ໄດ້ກ່າວຂອບໃຈ ຕໍ່ການສະໜັບສະໜູນທີ່ຍາວນານຂອງຈີນ, ຈະເດັດດ່ຽວເຄົາລົບຫຼັກການຈີນດຽວ ແລະ ພ້ອມທີ່ຈະເພີ່ມທະວີການຮ່ວມມືກັບຈີນ ຢ່າງຮອບດ້ານ, ຮ່ວມກັນກໍ່ສ້າງແລວເສດຖະກິດ ມຽນມາ-ຈີນ, ຍົກສູງລະດັບການຄ້າ ແລະ ການລົງທຶນ. ມຽນມາ ຈະເພີ່ມທະວີຄວາມສຳຄັນ ແລະ ອອກແຮງຢ່າງສຸດຂີດ ເພື່ອຮັບປະກັນຄວາມປອດໄພຂອງວິສາຫະກິດ ແລະ ບຸກຄະລາກອນຂອງຈີນ ຢູ່ມຽນມາ, ຍິນດີປະສານງານກັບຈີນ ຢ່າງໃກ້ຊິດ ເພື່ອປາບປາມການພະນັນທາງອອນລາຍ ແລະ ການຫຼອກລວງທາງໂທລະສັບ, ຮັກສາຄວາມໝັ້ນຄົງຢູ່ເຂດຊາຍແດນມຽນມາ, ສະໜັບສະໜູນຢ່າງເຕັມທີ່ ຕໍ່ 4 ຂໍ້ລິເລີ່ມທົ່ວໂລກ ທີ່ສະເໜີໂດຍ ສະຫາຍ ສີ ຈິ້ນຜິງ ແລະ ເພີ່ມທະວີການພົວພັນຮ່ວມມືກັບ ສປ ຈີນ.

### 3) ພັກແຮງງານເກົາຫຼີ

ໃນລະຫວ່າງວັນທີ 20-22 ມິຖຸນາ 2026, ພັກແຮງງານເກົາຫຼີ ໄດ້ຈັດກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 02 ສະໄໝທີ IX ໂດຍການເປັນປະທານຂອງ ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ ພ້ອມການນຳຂັ້ນສູງພັກ-ລັດ ເຂົ້າຮ່ວມ. ກອງປະຊຸມ ໄດ້ປຶກສາຫາລືຫຼາຍບັນຫາສຳຄັນຄື: (1) ການສະຫຼຸບຕີລາຄາ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍຂອງພັກ ແລະ ລັດ ໄລຍະ 06 ເດືອນຕົ້ນປີ 2026; (2) ການສົ່ງເສີມອຸດສະຫະກຳຖ່ານຫີນ ແລະ ການປັບປຸງໝູ່ບ້ານບໍ່ຖ່ານຫີນທົ່ວປະເທດ; (3) ມາດຕະການເພື່ອສົ່ງເສີມບົດບາດຂອງຄະນະກຳມະການປະຊາຊົນເມືອງ ແລະ ເຂດປົກຄອງ; (4) ການປັບປຸງບຸກຄະລາກອນ ແລະ (5) ການປະຕິບັດມະຕິຄຳສັ່ງຂອງກອງປະຊຸມໃຫຍ່ພັກແຮງງານເກົາຫຼີ ຄັ້ງທີ IX. ນອກນັ້ນ, ກອງປະຊຸມຄັ້ງນີ້ ຍັງເປັນການເພີ່ມທະວີຂະບວນການບຸກທະລຸໃນຂົງເຂດເສດຖະກິດ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ການກໍ່ສ້າງສັງຄົມນິຍົມຂອງ ສປປ ເກົາຫຼີ.

### 4) ພັກກອມມູນິດກູບາ

ວັນທີ 18 ມິຖຸນາ 2026, ສະພາແຫ່ງຊາດອຳນາດປະຊາຊົນ ໄດ້ພິຈາລະນາ ແລະ ຮັບຮອງຊຸດມາດຕະການປະຕິຮູບເສດຖະກິດ-ສັງຄົມຕະຫຼາດເສລີ 176 ຂໍ້, ຊຶ່ງຖືເປັນການປ່ຽນແປງໂຄງສ້າງເສດຖະກິດຄັ້ງໃຫຍ່ທີ່ສຸດຂອງ ສ.ກູບາ ໃນຮອບ 60 ປີ. ສະຫາຍ Manuel Marrero Cruz, ນາຍົກລັດຖະມົນຕີ ສ.ກູບາ, ໄດ້ກ່າວຕໍ່ສະພາວ່າ ການປັບປຸງຄັ້ງນີ້ແມ່ນມີຄວາມຈຳເປັນເພື່ອແກ້ໄຂສະພາບເສດຖະກິດທີ່ກຳລັງປະເຊີນຄວາມຫຍຸ້ງຍາກ. ມາດຕະການດັ່ງກ່າວລວມມີການເປີດກວ້າງພາກເອກະຊົນ, ການອະນຸຍາດໃຫ້ຊາວກູບາ ຢູ່ຕ່າງແດນເຂົ້າມາລົງທຶນ, ການປັບປຸງບົດບາດຂອງລັດວິສາຫະກິດ ແລະ ການສົ່ງເສີມລະບົບການເງິນ-ທະນາຄານແບບໃໝ່. ການປະຕິຮູບນີ້ບໍ່ແມ່ນການປະຖິ້ມແນວທາງສັງຄົມນິຍົມ, ແຕ່ແມ່ນການປັບຕົວໃຫ້ສອດຄ່ອງກັບສະພາບການປັດຈຸບັນ. ພ້ອມກັນນັ້ນ, ລັດຖະບານກູບາ ຍັງເນັ້ນວ່າ ມາດຕະການໃໝ່ຈະຊ່ວຍກະຕຸ້ນການຜະລິດ, ດຶງດູດທຶນ, ສ້າງວຽກເຮັດງານທຳ ແລະ ຫຼຸດຜ່ອນພາລະຂອງລັດ. ມາດຕະການນີ້ເກີດຂຶ້ນໃນຂະນະທີ່ ສ.ກູບາ ກຳລັງປະເຊີນວິກິດດ້ານເສດຖະກິດ, ພະລັງງານ, ເງິນເຟີ້ ແລະ ການຂາດແຄນສິນຄ້າຈຳເປັນ. ສະຫາຍ Miguel Díaz-Canel, ປະທານປະເທດກູບາ ໄດ້ຢືນຢັນວ່າ ລັດຖະບານຈະສືບຕໍ່ຮັກສາອະທິປະໄຕ ແລະ ຮູບແບບສັງຄົມນິຍົມຂອງປະເທດ, ພ້ອມທັງປັບປຸງກົນໄກເສດຖະກິດໃຫ້ມີປະສິດທິຜົນຫຼາຍຂຶ້ນ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ຄວາມຂັດແຍ່ງລະຫວ່າງ ໄທ ແລະ ກຳປູເຈຍ:** ໄທ ເຂົ້າຮ່ວມໃນຂະບວນການໄກ່ເກ່ຍແບບບັງຄັບ (Compulsory Conciliation) ພາຍໃຕ້ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍ ກົດໝາຍທາງທະເລ (UNCLOS), ຫຼັງຈາກ ກຳປູເຈຍ ໄດ້ຍື່ນຂໍ້ສະເໜີດັ່ງກ່າວຢ່າງເປັນທາງການ, ທັງສອງປະເທດມີການອ້າງສິດໃນພື້ນທີ່ທາງທະເລປະມານ 26,000 ກິໂລຕາແມັດ ໃນອ່າວໄທ, ຊຶ່ງຄາດຄະເນວ່າ ເປັນແຫຼ່ງຊັບພະຍາກອນອາຍແກັສທຳມະຊາດ ແລະ ນ້ຳມັນ ມູນຄ່າ ປະມານ 300 ຕື້ໂດລາສະຫະລັດ. ໃນເດືອນພຶດສະພາ 2026 ຜ່ານມາ, ໄທ ໄດ້ປະກາດຍົກເລີກບົດບັນທຶກຄວາມເຂົ້າໃຈ ປີ 2001 ທີ່ລົງນາມຮ່ວມກັນ, ຈາກບັນຫາຄວາມຂັດແຍ່ງກັນຢູ່ຊາຍແດນ ປີ 2025 ຜ່ານມາ. ກຳປູເຈຍ ຈຶ່ງໄດ້ເລືອກໃຊ້ກົນໄກຂອງ UN ເພື່ອແກ້ໄຂບັນຫາ. ນອກຈາກນີ້, ໄທ ໄດ້ປະກາດຢຸດການເຈລະຈາສອງຝ່າຍທັງໝົດ ລວມທັງບັນຫາຊາຍແດນທາງບົກ ເພື່ອສຸມໃສ່ຂະບວນການຂອງ UN ພຽງຢ່າງດຽວ.

**ການປະທ້ວງຢູ່ອິນໂດເນເຊຍ:** ວັນທີ 12 ມິຖຸນາ 2026, ນັກສຶກສາປະມານ 1,500 ຄົນ ໄດ້ອອກມາເດີນຂະບວນປະທ້ວງໃນນະຄອນຫຼວງຈາກາກາຕາ, ອິນໂດເນເຊຍ ເພື່ອສະແດງຄວາມບໍ່ພໍໃຈ ຕໍ່ນະໂຍບາຍເສດຖະກິດຂອງລັດຖະບານ ພາຍໃຕ້ການນຳພາຂອງ ທ່ານ ປຣາໂບໂວ ຊູບຽນໂຕ (Prabowo Subianto), ປະທານາທິບໍດີ ອິນໂດເນເຊຍ. ການປະທ້ວງຄັ້ງນີ້ຖືກເອີ້ນວ່າ "Heading to Bankrupt Indonesia". ຜູ້ປະທ້ວງຮຽກຮ້ອງໃຫ້ລັດຖະບານ ຫຼຸດລາຄານ້ຳມັນເຊື້ອໄຟ ແລະ ລາຄາອາຫານ ທີ່ເພີ່ມສູງຂຶ້ນ ເນື່ອງມາຈາກສົງຄາມ ລະຫວ່າງ ອາເມຣິກາ-ອິດສະຣາແອນ ແລະ ອີຣານ ທີ່ເຮັດໃຫ້ເກີດວິກິດໃນລະບົບຕ່ອງໂສ້ການສະໜອງໃນທົ່ວໂລກ ແລະ ສົ່ງຜົນໃຫ້ຄ່າເງິນຣູເປຍຂອງອິນໂດເນເຊຍ ອ່ອນຄ່າລົງຢ່າງໜັກໜ່ວງ. ຜູ້ປະທ້ວງ ຍັງໄດ້ສະແດງຄວາມກັງວົນຕໍ່ການເພີ່ມຂຶ້ນ ຂອງບົດບາດທະຫານໃນວຽກງານພົນລະເຮືອນ ຊຶ່ງພວກເຂົາເຫັນວ່າ ເປັນໄພຂົ່ມຂູ່ຕໍ່ປະຊາທິປະໄຕຂອງປະເທດ. ລັດຖະບານໄດ້ລະດົມເຈົ້າໜ້າທີ່ຕຳຫຼວດ ແລະ ທະຫານ ມາຮັກສາຄວາມສະຫງົບ ແລະ ໄດ້ເກີດການປະທະກັນຂຶ້ນໃນບາງຈຸດ ເມື່ອນັກສຶກສາພະຍາຍາມບຸກຜ່ານແນວປ້ອງກັນຂອງຕຳຫຼວດ. ແກນນຳການປະທ້ວງໄດ້ກ່າວວ່າ ທາງການໄດ້ສະກັດກັ້ນບໍ່ໃຫ້ຜູ້ປະ

ຫ້ອງຈຳນວນໜຶ່ງ ເຂົ້າຮ່ວມການໂຮມຊຸມນຸມ ໂດຍໄດ້ວິຈານລັດຖະບານວ່າ ປະຕິເສດຄວາມເປັນຈິງ ຕໍ່ສະຖານະການທີ່ເກີດຂຶ້ນ ແລະ ຮຽກຮ້ອງໃຫ້ ທ່ານ Prabowo ຍອມຮັບຂໍ້ຜິດພາດຂອງຕົນເອງ.

**ສະພາບແຫຼມເກົາຫຼີ:** ສປປ ເກົາຫຼີ ອອກຖະແຫຼງການກ່າວປະນາມ ຕໍ່ກໍລະນີ ສ.ອາເມຣິກາ ອະນຸມັດການຂາຍອາວຸດໃຫ້ແກ່ ສ.ເກົາຫຼີ ທີ່ມີມູນຄ່າປະມານ 300 ລ້ານໂດລາສະຫະລັດ, ໂດຍຖືວ່າ ການກະທຳດັ່ງກ່າວ ເປັນຄວາມພະຍາຍາມຂອງ ສ.ອາເມຣິກາ ໃນການເພີ່ມທະວີຂີດຄວາມສາມາດດ້ານການທະຫານຮ່ວມກັບ ສ.ເກົາຫຼີ ເພື່ອກົດດັນ ສປປ ເກົາຫຼີ ໂດຍກົງ ແລະ ເພີ່ມທະວີເຮັດໃຫ້ແຫຼມເກົາຫຼີ ມີຄວາມເຄັ່ງຕຶງຂຶ້ນຕື່ມ. ເຖິງຢ່າງໃດກໍຕາມ, ສປປ ເກົາຫຼີ ແລະ ສ.ເກົາຫຼີ ຕ່າງຝ່າຍຕ່າງກໍອ້າງເຖິງ ການເສີມສ້າງກຳລັງດ້ານການທະຫານຂອງຕົນນັ້ນ ແມ່ນເພື່ອຈຸດປະສົງການປ້ອງກັນຕົນເອງ, ແຕ່ໃນຕົວຈິງ ຍິ່ງເປັນການຍຸແຍ່ງໃຫ້ເກີດມີການແຂ່ງຂັນກັນທາງດ້ານອາວຸດຢູ່ໃນພາກພື້ນ ຫຼາຍຂຶ້ນ.

**ສ.ເກົາຫຼີ:** ວັນທີ 24 ມິຖຸນາ 2026, ທ່ານ ຈອງ ຊອງ-ແຣ (Jung Chung-rae), ຫົວໜ້າພັກປະຊາທິປະໄຕ ທີ່ເປັນພັກລັດຖະບານ ໄດ້ລາອອກຈາກຕຳແໜ່ງປະທານພັກ ຫຼັງຈາກທີ່ບໍລິຫານພັກມາຈົນເກືອບຄົບວາລະ. ການປະກາດລາອອກໃນຄັ້ງນີ້ ບໍ່ໄດ້ເກີດຈາກຄວາມຂັດແຍ່ງຮຸນແຮງ ຫຼື ຂໍ້ຜິດພາດທາງການເມືອງ ແຕ່ເປັນ "ແຜນຍຸດທະສາດ" ເພື່ອເປີດທາງໃຫ້ຕົນເອງສາມາດລົງສະໝັກຮັບເລືອກຕັ້ງເປັນຫົວໜ້າພັກ ສະໄໝທີ II ໃນກອງການປະຊຸມໃຫຍ່ຂອງພັກ ທີ່ຈະມາເຖິງ. ຕາມກົດລະບຽບຂອງພັກແລ້ວ, ຫົວໜ້າພັກຄົນປັດຈຸບັນ ທີ່ຕ້ອງການຈະລົງສະໝັກແຂ່ງຂັນຕຳແໜ່ງນີ້ອີກສະໄໝ ຈະຕ້ອງລາອອກຈາກຕຳແໜ່ງກ່ອນວັນເລືອກຕັ້ງ. ໃນລະຫວ່າງນີ້, ພັກປະຊາທິປະໄຕເກົາຫຼີ ໄດ້ແຕ່ງຕັ້ງໃຫ້ ທ່ານ ຮັນ ບີອຸງ-ໂດ (Han Byung-do) ເຂົ້າມາຮັບຕຳແໜ່ງຮັກສາການຫົວໜ້າພັກຊົ່ວຄາວ ເພື່ອຄຸ້ມຄອງ ແລະ ຈັດການເລືອກຕັ້ງພາຍໃນພັກໃຫ້ເປັນໄປຢ່າງຮຽບຮ້ອຍ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ຄວາມຂັດແຍ່ງລະຫວ່າງ ອູແກຣນ-ຣັດເຊຍ:** ສອງຝ່າຍ ຍັງສືບຕໍ່ໂຈມຕີກັນ ທາງອາກາດ ໂດຍນຳໃຊ້ໂດຣນເປັນຫຼັກ. ອູແກຣນ ໄດ້ສົ່ງໂດຣນ ປະມານ 200 ລຳ ໂຈມຕີໃສ່ ນະຄອນຫຼວງມົດສະກູ, ຖືເປັນການໂຈມຕີໃຫຍ່ທີ່ສຸດ ນັບແຕ່ເກີດຄວາມຂັດແຍ່ງ. ເປົ້າໝາຍຫຼັກໃນການໂຈມຕີແມ່ນ ໂຮງກັ່ນນ້ຳມັນ ກາສປຣອມເນັບ (Gazpromneft oil refinery - Kapotnya) ຊຶ່ງໄດ້ຮັບຄວາມເສຍຫາຍຢ່າງໜັກ. ສ່ວນ ຣັດເຊຍ ໄດ້ຍິງລູກສອນໄຟໂຈມຕີໃສ່ໂບດ ຄຣິສຕຽນ ກີຢິບ ເປເຊີສ ລາຟຣາ (Kyiv Pechersk Lavra) ເຮັດໃຫ້ ວິຫານດໍມິດຊັນ (Dormition Cathedral) ທີ່ມີອາຍຸ 1,000 ປີ ຂອງອູແກຣນ ຊຶ່ງເປັນສະຖານທີ່ມໍລະດົກໂລກທີ່ຖືກຮັບຮອງໂດຍອົງການ UNESCO ໄດ້ຮັບຄວາມເສຍຫາຍ. ພ້ອມທັງ ໂຈມຕີໃສ່ເມືອງ ຄາກິບ (Kharkiv) ເຮັດໃຫ້ມີຜູ້ເສຍຊີວິດ 05 ຄົນ. ຂະນະທີ່, ອັງກິດ ໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະສະໜອງໂດຣນ 150,000 ລຳ ໃຫ້ແກ່ອູແກຣນ ໃນທ້າຍປີ 2026, ມູນຄ່າປະມານ 991 ລ້ານໂດລາສະຫະລັດ. ນອກຈາກນີ້, ໃນກອງປະຊຸມ G7 ທີ່ ປະເທດຝຣັ່ງ, ທ່ານ ວະລາດິເມຍ ເຊເລນສະກີ ກໍໄດ້ພົບປະສອງຝ່າຍກັບ ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ເພື່ອປຶກສາຫາລື ກ່ຽວກັບການຢຸດຕິຄວາມຂັດແຍ່ງ. ໃນຂະນະທີ່ ບັນດາຜູ້ນຳ G7 ໄດ້ຢືນຢັນການສະໜັບສະໜູນຄືນໃໝ່, ໂດຍໃຫ້ຄຳໝັ້ນສັນຍາວ່າ ຈະເພີ່ມການສົ່ງມອບລະບົບປ້ອງກັນໄພທາງອາກາດ ແລະ ເພີ່ມການຂວ້ຳບາດຕໍ່ຂະແໜງພະລັງງານຂອງ ຣັດເຊຍ.

**ເຢຍລະມັນ:** ວັນທີ 03 ມິຖຸນາ 2026, ເຢຍລະມັນ ໄດ້ພົບກັບຄວາມປະລາໄຊທາງການທູດທີ່ສຳຄັນ ພາຍຫຼັງທີ່ບໍ່ສາມາດຍາດໄດ້ບ່ອນນັ່ງສະມາຊິກບໍ່ຖາວອນ ຂອງສະພາຄວາມໝັ້ນຄົງແຫ່ງສະຫະປະຊາຊາດ (UNSC), ຊຶ່ງເປັນຄັ້ງທຳອິດໃນປະຫວັດສາດການລົງສະໝັກ ໂດຍໄດ້ຮັບຄະແນນພຽງ 104 ຄະແນນສຽງ ຈາກ 193 ປະເທດສະມາຊິກ ສປຊ, ຂະນະທີ່ປ໋ອກຕຸຍການ ໄດ້ 134 ຄະແນນ ແລະ ໂອຕຣິດ ໄດ້ 131 ຄະແນນ. ພາຍຫຼັງການເລືອກຕັ້ງ ເຢຍລະມັນ ໄດ້ກ່າວຫາວ່າ ຣັດເຊຍ ເປັນຜູ້ຍຸແຍ່ບໍ່ໃຫ້ປະເທດສະມາຊິກ ສປຊ ສະໜັບສະໜູນເຢຍລະມັນ ເນື່ອງຈາກ ເຢຍລະມັນເປັນຜູ້ສະໜັບສະໜູນທີ່ສຳຄັນແກ່ ອູແກຣນ ໃນຄວາມຂັດແຍ່ງກັບ ຣັດເຊຍ. ສະຫຼຸບແລ້ວ, ການປະລາໄຊໃນຄັ້ງນີ້ ໄດ້ສະແດງໃຫ້ເຫັນເຖິງບົດບາດທີ່ຫຼຸດລົງຂອງເຢຍລະມັນໃນເວທີສາກົນ ເຖິງແມ່ນວ່າ ເຢຍລະມັນຈະເປັນປະເທດເສດຖະກິດທີ່ໃຫຍ່ທີ່ສຸດ ຂອງເອີຣົບ ກໍຕາມ.

**ອາກເມນີ:** ວັນທີ 07 ມິຖຸນາ 2026, ອາກເມນີ ໄດ້ຈັດການເລືອກຕັ້ງລັດຖະສະພາ ຊຸດທີ 9 ຂຶ້ນຢ່າງເປັນທາງການ, ໂດຍມີ ຜູ້ໄປໃຊ້ສິດເລືອກຕັ້ງສູງເຖິງ 1.47 ລ້ານຄົນ, ຫຼື ປະມານ 58.97% ໃນຈຳນວນຜູ້ມີສິດເລືອກຕັ້ງປະມານ 2.5 ລ້ານຄົນ, ເພີ່ມຂຶ້ນຈາກ 49.39% ໃນປີ 2021, ມີ 18 ພັກການເມືອງ ລົງແຂ່ງຂັນໃນການເລືອກຕັ້ງຄັ້ງນີ້. ຜົນການນັບຄະແນນຈາກທຸກໜ່ວຍເລືອກຕັ້ງ ເຫັນວ່າ ພັກສັນຍາປະຊາຄົມ (Civil Contract) ຂອງ ທ່ານ ນິໂຄລ ປາຊິນ

ຢານ (Nikol Pashinyan), ນາຍົກລັດຖະມົນຕີ ແລະ ເປັນພັກລັດຖະບານປັດຈຸບັນ ໄດ້ຮັບໄຊຊະນະ ດ້ວຍຄະແນນສຽງ 49.81%, ເທົ່າກັບ 64 ບ່ອນນັ່ງ, ຫຼຸດລົງ 07 ບ່ອນນັ່ງ. ຮອງລົງມາແມ່ນ ພັກພັນທະມິດອາກເມນີເຂັ້ມແຂງ (Strong Armenia) ທີ່ສ້າງຕັ້ງຂຶ້ນໃໝ່ ນໍາໂດຍ ທ່ານ ຊາມເວລ ຄາຣາເປຕຽນ (Samvel Karapetyan) ໄດ້ 29 ບ່ອນນັ່ງ, ເທົ່າກັບ 23.31%, ກຸ່ມພັກພັນທະມິດອາກເມນີ (Armenia Alliance) ໄດ້ 12 ບ່ອນນັ່ງ, ເທົ່າກັບ 9.94%, ຫຼຸດລົງ 17 ບ່ອນນັ່ງ, ສ່ວນພັກອື່ນໆ ໄດ້ບໍ່ເຖິງ 5% ແລະ ບໍ່ໄດ້ບ່ອນນັ່ງ. ຜົນການເລືອກຕັ້ງດັ່ງກ່າວ ເຮັດໃຫ້ພັກ Civil Contract ສາມາດຮັກສາສຽງສ່ວນຫຼາຍໃນລັດຖະສະພາ ແລະ ສືບຕໍ່ເປັນແກນນໍາໃນການ ຈັດຕັ້ງລັດຖະບານ. ໂດຍມີນະໂຍບາຍຫຼັກ ແມ່ນການເປີດເສັ້ນທາງຄົມມະນາຄົມ ແລະ ການຄ້າ ໃນພາກພື້ນ ພ້ອມທັງຊຸກຍູ້ການລົງນາມໃນສົນທິສັນຍາສັນຕິພາບແບບຖາວອນ ກັບປະເທດ ອາແຊກໄບຊານ ແລະ ຕວັກກີ ເພື່ອຫຼຸດຜ່ອນຄວາມເຄັ່ງຕຶງ ແລະ ສ້າງສະຖຽນລະພາບໄລຍະຍາວ ລວມທັງກະຈາຍຄວາມສ່ຽງດ້ານຄວາມໝັ້ນຄົງ ໂດຍການຫຼຸດຜ່ອນການເພິ່ງພາຣັດເຊຍ ແລະ ອົງການສົນທິສັນຍາຄວາມໝັ້ນຄົງຮ່ວມກັນ (CSTO) ໂດຍຫັນໄປສ້າງການພົວພັນດ້ານການທະຫານ ກັບບັນດາປະເທດຕາເວັນຕົກ (ເຊັ່ນ: ຝຣັ່ງ, ສ.ອາເມຣິກາ, ສະຫະພາບເອີຣົບ) ລວມເຖິງອິນເດຍ ໃຫ້ຫຼາຍຂຶ້ນ.

**ກອງປະຊຸມສຸດຍອດ G7 ຄັ້ງທີ 52:** ກອງປະຊຸມສຸດຍອດກຸ່ມປະເທດອຸດສາຫະກໍາ 07 ປະເທດ (ສ.ອາເມຣິກາ, ອັງກິດ, ຝຣັ່ງ, ອີຕາລີ, ການາດາ, ເຢຍລະມັນ ແລະ ຍີ່ປຸ່ນ) ໄດ້ຈັດຂຶ້ນແຕ່ວັນທີ 15-17 ມິຖຸນາ 2026, ທີ່ເມືອງ Evian, ປະເທດຝຣັ່ງ. ກອງປະຊຸມຄັ້ງນີ້ ເນັ້ນໃສ່ການປຶກສາຫາລືບັນຫາສໍາຄັນຕ່າງໆ ເຊັ່ນ: ຄວາມຂັດແຍ່ງ ຣັດເຊຍ ແລະ ຢູເຄຣນ, ຄວາມເຄັ່ງຕຶງໃນພາກພື້ນຕາເວັນອອກກາງ ພາຍຫຼັງຄວາມຄືບໜ້າຂອງຂໍ້ຕົກລົງ ລະຫວ່າງ ອາເມຣິກາ-ອີຣານ, ຄວາມໝັ້ນຄົງດ້ານພະລັງງານ, ການຟື້ນຟູເສດຖະກິດໂລກ ແລະ ການຄວບຄຸມ ແລະ ພັດທະນາເຕັກໂນໂລຊີປັນຍາປະດິດ (AI) ຢ່າງປອດໄພ. ພ້ອມດຽວກັນ, ກໍໄດ້ມີການເຜີຍແຜ່ເອກະສານສໍາຄັນ 09 ສະບັບ ທີ່ເນັ້ນໃສ່ຫົວຂໍ້ສະເພາະ ຊຶ່ງກວມເອົາດ້ານຕ່າງໆ ເຊັ່ນ: ພູມສາດການເມືອງ, ເສດຖະກິດໂລກ ແລະ ສາທາລະນະສຸກ. ກອງປະຊຸມສິ້ນສຸດລົງ ໂດຍບໍ່ສາມາດການອອກຖະແຫຼງການສະບັບສຸດທ້າຍ (final communique) ຊຶ່ງເປັນປີທີສອງຕິດຕໍ່ກັນ ທີ່ບໍ່ສາມາດອອກຖະແຫຼງການສະບັບສຸດທ້າຍໄດ້ ຕໍ່ຈາກປີ 2025 ທີ່ ການາດາ ເປັນປະທານ. ເຖິງຢ່າງ ໃດກໍຕາມ, ຝຣັ່ງ ໃນຖານະເປັນເຈົ້າພາບ ໄດ້ອອກຖະແຫຼງການວ່າ ໄດ້ປະສົບຄວາມສໍາເລັດຢ່າງເປັນຮູບປະທໍາ ເນື່ອງຈາກ 07 ປະເທດ ສາມາດບັນລຸຂໍ້ຕົກລົງຮ່ວມກັນໃນຫຼາຍບັນຫາສໍາຄັນ ເປັນຕົ້ນ: ວິກິດການຢູເຄຣນ, ສະຖານະການໃນຕາເວັນອອກກາງ, ຍຸດທະສາດດ້ານແຮ່ທາດ, ການປັບສົມດຸນເສດຖະກິດມະຫາພາກ ແລະ ບັນຫາອື່ນໆ. ພ້ອມດຽວກັນ, ໃນວັນທີ 14 ມິຖຸນາ 2026, ກ່ອນກອງປະຊຸມ ກໍໄດ້ມີການປະທ້ວງຕໍ່ຕ້ານ G7 ທີ່ ເຊີແນວປະເທດສະວິດ ທີ່ມີຜູ້ເຂົ້າຮ່ວມປະທ້ວງປະມານ 20,000 ຄົນ ເພື່ອສະແດງຄວາມບໍ່ພໍໃຈ ຕໍ່ກັບຜູ້ນໍາປະເທດອຸດສາຫະກໍານໍາໜ້າ ແລະ ນະໂຍບາຍຕ່າງໆ ຂອງ G7, ຕໍ່ກັບເຫດການດັ່ງກ່າວ ຝຣັ່ງ ໄດ້ສັ່ງປິດດ່ານຊາຍແດນ 35 ແຫ່ງທີ່ຕິດກັບສະວິດ ແລະ ພ້ອມທັງລະດົມກໍາລັງປະມານ 16,000 ຄົນ ເພື່ອຮັກສາຄວາມປອດໄພໃນໄລຍະກອງປະຊຸມ.

**ການເມືອງຮັງກາຣີ:** ວັນທີ 13 ມິຖຸນາ 2026, ພັກ Fidesz ໄດ້ຈັດກອງປະຊຸມໃຫຍ່ຄັ້ງທີ 32 ຂອງພັກ (32nd leadership-election congress) ທີ່ນະຄອນຫຼວງບູດາເປັສ, ຊຶ່ງ ທ່ານ ວິກເຕີ ອໍບານ (Viktor Orbán) ໄດ້ຮັບເລືອກໃຫ້ສືບຕໍ່ເປັນຫົວໜ້າພັກ Fidesz ອີກໜຶ່ງປີ, ໂດຍໄດ້ຮັບ 729 ສຽງຈາກຜູ້ແທນ 737 ຄົນ, ໂດຍບໍ່ມີຜູ້ສະໝັກແຂ່ງຂັນ. ເຖິງວ່າ ພັກຂອງ ທ່ານ Viktor Orbán ໄດ້ສູນເສຍອໍານາດໃຫ້ແກ່ ພັກ Tisza ໃນການເລືອກຕັ້ງໃນຄັ້ງວັນທີ 12 ເມສາ 2026. ທ່ານ Orbán ໄດ້ປະກາດຈະປັບປຸງພັກ ເພື່ອສືບຕໍ່ບົດບາດໃນຖານະພັກຝ່າຍຄ້ານ.

**ຝຣັ່ງ, ເຢຍລະມັນ, ອີຕາລີ, ໂປໂລຍ, ອັງກິດ ແລະ NATO ຈະຮັດແໜ້ນການຮ່ວມມືທາງດ້ານອຸດສາຫະກໍາການປ້ອງກັນປະເທດ:** ບັນດາປະເທດດັ່ງກ່າວ ໄດ້ອອກຖະແຫຼງການຮ່ວມ ໃນວັນທີ 24 ມິຖຸນາ 2026. ພາຍຫຼັງການພົບປະແບບທາງໄກກັບເລຂາທິການໃຫຍ່ ນາໂຕ້ (NATO). ການຮ່ວມມືດັ່ງກ່າວ ຈະເຮັດໃຫ້ເອີຣົບ ກັບ ນາໂຕ້ ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ ຊຶ່ງຈະເປັນບາດກ້າວທີ່ສໍາຄັນໃນການເພີ່ມຂີດຄວາມສາມາດ, ການກຽມຄວາມພ້ອມ ແລະ ຄວາມເຂັ້ມແຂງໃນສົງຄາມທີ່ມີຄວາມຈໍາເປັນເພື່ອການປ້ອງກັນຕົນເອງ.ອີງຕາມຖະແຫຼງການ ພວກເຂົາຈະສຸມໃສ່ການປ້ອງກັນທາງອາກາດ, ລະບົບທີ່ບໍ່ມີຄົນຂັບ, ລະບົບ AI ແລະ ຂີດຄວາມສາມາດອື່ນໆ ລວມທັງອາວຸດທີ່ຍິງໃນໄລຍະໄກແຕ່ສາມາດການໂຈມຕີທີ່ແນ່ນອນ. ພວກເຂົາຍັງໄດ້ເນັ້ນຢໍ້າເຖິງຄວາມສໍາຄັນ ຂອງການໃຊ້ປະໂຫຍດຈາກເຕັກໂນໂລຊີໃໝ່ດ້ວຍການສະໜັບສະໜູນຜ່ານກົນໄກທາງການເງິນ. ສໍາລັບບັນຫາຢູເຄຣນ, ພວກເຂົາໃຫ້ຄໍາໝັ້ນສັນຍາວ່າ ຈະສືບຕໍ່ສະໜັບສະໜູນຢູເຄຣນ ໃນການປ້ອງກັນປະເທດ ແລະ ສ້າງຄວາມເຂັ້ມແຂງທາງດ້ານພະລັງງານ ລວມທັງການ

ຂວ້ຳບາດ ແລະ ການກິດກັນທາງເສດຖະກິດຕໍ່ຣັດເຊຍ. ຕໍ່ບັນຫາອີຣານ, ພວກເຂົາຢືນຢັນຄືນເຖິງຄວາມສຳຄັນຂອງການເດີນເຮືອຢ່າງເສລີ ຢູ່ຊ່ອງແຄບຮໍມຸດ.

**ຜົນການເລືອກຕັ້ງປະທານາທິບໍດີເປຣູ:** ທ່ານ ນາງ ເຄໂກ ຟູຈິໂມຣິ (Keiko Fujimori), ນັກການເມືອງອະນຸລັກນິຍົມ, ອາຍຸ 51 ປີ, ລູກສາວຂອງອະດີດປະທານາທິບໍດີ ອັນເບີໂຕ ຟູຈິໂມຣິ (Alberto Fujimori) ສາມາດເອົາຊະນະຄູ່ແຂ່ງຝ່າຍຊ້າຍ ຄື ທ່ານ ໂຣເບີໂຕ ຊານເຊສ (Roberto Sanchez) ດ້ວຍຄະແນນສຽງຫຼາຍກວ່າຄູ່ແຂ່ງປະມານ 50.000 ຄະແນນ ຈາກຈຳນວນຜູ້ລົງຄະແນນສຽງທັງໝົດ 18 ລ້ານສຽງ. ທ່ານ ນາງ ເຄໂກ ມີກຳນົດເຂົ້າຮັບຕຳແໜ່ງຢ່າງເປັນທາງການໃນວັນທີ 28 ກໍລະກົດ 2026 ໂດຍມີວາລະການບໍລິຫານປະເທດ 5 ປີ ແລະ ໃຫ້ຄຳໝັ້ນສັນຍາວ່າ ຈະຟື້ນຟູຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຫວັງຂອງເປຣູ ກັບຄືນມາ ເນື່ອງຈາກການເລືອກຕັ້ງຄັ້ງນີ້ມີຂຶ້ນທ່າມກາງບັນຫາອາຊະຍາກຳທີ່ເພີ່ມຂຶ້ນ ແລະ ການເມືອງຂາດສະຖຽນລະພາບຊໍາເຮື້ອມາດົນ ເຮັດໃຫ້ເປຣູ ມີປະທານາທິບໍດີເຖິງ 08 ທ່ານ ພາຍໃນໄລຍະເວລາ 10 ປີຜ່ານມາ. ສະນັ້ນ, ທ່ານ ນາງ ເຄໂກ ຈຶ່ງໄດ້ປະກາດຈະນຳໃຊ້ມາດຕະການເດັດຂາດ ໃນການຄວບຄຸມສະຖານະການ ຄືກັນກັບອະດີດປະທານາທິບໍດີຜູ້ເປັນພໍ່ ທີ່ເຄີຍປາບປາມກຸ່ມກະບົດ ແລະ ແກ້ໄຂບັນຫາເງິນເຟີ້ໄດ້ສຳເລັດ, ແຕ່ກໍຖືກຕັດສິນຈຳຄຸກໃນຂໍ້ຫາສໍ້ລາດບັງຫຼວງ ແລະ ລະເມີດສິດທິມະນຸດ ສ່ວນ ທ່ານ ໂຣເບີໂຕ, ຜູ້ສະໝັກຝ່າຍຊ້າຍ ຍັງບໍ່ຍອມຮັບຜົນການເລືອກຕັ້ງ ໂດຍກ່າວຫາວ່າ ມີຄວາມຜິດປົກກະຕິໃນການນັບຄະແນນສຽງຈາກຕ່າງປະເທດ. ເຖິງຢ່າງໃດກໍຕາມ, ໄຊຊະນະຂອງ ທ່ານ ນາງ ເຄໂກ ໃນຄັ້ງນີ້ ເປັນການກັບມາມີອຳນາດອີກຄັ້ງຂອງຝ່າຍຂວາ ໃນພາກພື້ນອາເມລິກາລາຕິນ.

## 4.ພາກພື້ນຕາເວັນອອກກາງ

**ສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ:** ສະຖານະການລະຫວ່າງ ສ.ອາເມຣິກາ ແລະ ອີຣານ ຍັງສືບຕໍ່ເຄັ່ງຕຶງ, ຕ່າງຝ່າຍຕ່າງກ່າວຫາກັນວ່າ ລະເມີດຂໍ້ຕົກລົງຢຸດຍິງຊົ່ວຄາວທີ່ໄດ້ລົງນາມຮ່ວມກັນ ບໍ່ຮອດ 02 ອາທິດ ເພື່ອຢຸດຕິສົງຄາມທີ່ແກ່ຍາວມາເປັນເວລາ 04 ເດືອນ, ໃນວັນທີ 27 ມິຖຸນາ 2026, ສ.ອາເມຣິກາ ໄດ້ດຳເນີນການໂຈມຕີທາງອາກາດໃສ່ເປົ້າໝາຍຫຼາຍແຫ່ງໃນອີຣານ ເພື່ອເປັນການຕອບໂຕ້ການຮຸກຮານຢ່າງຕໍ່ເນື່ອງຂອງອີຣານ ຕໍ່ກັບເຮືອຂົນສົ່ງສິນຄ້າທາງທະເລ. ສ່ວນອີຣານ ໄດ້ດຳເນີນການໂຈມຕີຕອບໂຕ້ໃສ່ຖານທັບຂອງ ສ.ອາເມຣິກາ ໃນກູເວດ ແລະ ບາເຣນ ພ້ອມທັງເຕືອນວ່າ ຈະມີການຕອບໂຕ້ທີ່ຮຸນແຮງກວ່ານີ້ ຖ້າຫາກ ສ.ອາເມຣິກາ ຍັງສືບຕໍ່ການຮຸກຮານອີຣານ. ຕໍ່ມາສອງຝ່າຍໄດ້ເຈລະຈາຮອບໃໝ່ ທີ່ ກາຕາ ໃນວັນທີ 30 ມິຖຸນາ 2026 ແລະ ໄດ້ສິ້ນສຸດລົງ ໂດຍບໍ່ມີຄວາມຄືບໜ້າເພື່ອກ້າວໄປສູ່ສັນຕິພາບທີ່ຍືນຍົງ, ຊຶ່ງການເຈລະຈາ ແມ່ນໄດ້ເນັ້ນໃສ່ບັນຫາຕ່າງໆ ທີ່ສອງປະເທດເຄີຍໄດ້ຕົກລົງກັນແລ້ວ ຊຶ່ງບັນຫາທີ່ຍົກມາປຶກສາຫາລື ແມ່ນການຈາລະຈອນທາງເຮືອໃນຊ່ອງແຄບຮໍມຸດ ແລະ ການປ່ອຍຊັບສິນຂອງອີຣານ ທີ່ຖືກອາຍັດໄວ້, ຊຶ່ງແມ່ນບັນຫາສຳຄັນພາຍໃຕ້ຂໍ້ຕົກລົງເບື້ອງຕົ້ນ. ຂະນະທີ່, ການຈາລະຈອນທາງເຮືອໃນຊ່ອງແຄບຮໍມຸດຈະເລີ່ມກັບມາບາງສ່ວນ, ແຕ່ສະຖານະຂອງເສັ້ນທາງເດີນເຮືອຍຸດທະສາດນີ້ ຍັງບໍ່ມີຄວາມແນ່ນອນ. ພ້ອມດຽວກັນນັ້ນ, ກອງທັບອິດສະຣາແອນ ຍັງປະຈຳການຢູ່ທາງພາກໃຕ້ຂອງລີບັງ ພ້ອມທັງສືບຕໍ່ໂຈມຕີກຸ່ມຮິດບານເລາະ ເຖິງວ່າ ອິດສະຣາແອນ ແລະ ລີບັງ ຈະໄດ້ລົງນາມໃນຂໍ້ຕົກລົງທີ່ ສ.ອາເມຣິກາ ເປັນຕົວກາງໄກ່ເກ່ຍໃນວັນທີ 26 ມິຖຸນາ 2026 ເພື່ອຢຸດຕິສົງຄາມ, ເນື່ອງຈາກອິດສະຣາແອນ ປະຕິເສດທີ່ຈະຖອນກຳລັງທະຫານຂອງຕົນອອກ ຈົນກວ່າກຸ່ມຮິດບານເລາະ ຈະຍອມວາງອາວຸດຢ່າງສົມບູນ ຊຶ່ງເປັນເງື່ອນໄຂທີ່ກຸ່ມຮິດບານເລາະ ໄດ້ປະຕິເສດມາໂດຍຕະຫຼອດ.

## II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

### 1. ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສົ່ງສານອວຍພອນເຖິງ ຄະນະກຳມະການສູນກາງພັກກອມມູນິດຈີນ ເນື່ອງໃນໂອກາດ ວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 105 ປີ

ເນື່ອງໃນໂອກາດວັນສ້າງພັກກອມມູນິດຈີນ ຄົບຮອບ 105 ປີ, ໃນນາມ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ສະມາຊິກພັກ ແລະ ປະຊາຊົນລາວ ຂໍສົ່ງຄວາມຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງ ຄະນະກຳມະການສູນກາງພັກກອມມູນິດຈີນ, ສະມາຊິກພັກ ແລະ ປະຊາຊົນຈີນອ້າຍນ້ອງທຸກຖ້ວນໜ້າ.

ຕະຫຼອດໄລຍະ 105 ປີ ຜ່ານມາ, ພາຍໃຕ້ການນຳພາອັນສະຫລາດສ່ອງໃສຂອງ ພັກກອມມູນິດຈີນ, ປະຊາຊົນຈີນອ້າຍນ້ອງ ສາມາດຍາດໄດ້ບັນດາຜົນສຳເລັດອັນໃຫຍ່ຫຼວງໃນການຕໍ່ສູ້ເພື່ອເອກະລາດແຫ່ງຊາດ, ກ້າວໄປເຖິງການສ້າງຕັ້ງສາທາລະນະລັດ ປະຊາຊົນຈີນ ຂຶ້ນໃນປີ 1949, ໄດ້ນຳພາປະຊາຊົນຈີນ ດຳເນີນການປະຕິຮູບ ແລະ ເປີດປະຕູສູ່ພາຍນອກໃນປີ 1978 ເປັນຕົ້ນມາ ແລະ ການນຳຮຸ່ນຕ່າງໆຂອງຈີນ ໄດ້ສືບຕໍ່ນຳພາປະຊາຊົນຈີນ ສ້າງສາປະເທດສັງຄົມນິຍົມຕາມສີສັນຂອງຈີນ. ກ້າວເຂົ້າສູ່ຍຸກໃໝ່, ການຈັດຕັ້ງຜັນຂະຫຍາຍ ແນວຄິດ ສີ ຈິ້ນຜິງ ວ່າດ້ວຍສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ໃນຍຸກໃໝ່ ຕາມທິດຫັນເປັນທັນສະໄໝ ແລະ ມີຄຸນະພາບສູງ ຍິ່ງເຮັດໃຫ້ ສປ ຈີນ ມີສະຖຽນລະພາບທາງດ້ານການເມືອງ, ເສດຖະກິດມີການຂະຫຍາຍຕົວສູງຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບປອດໄພ, ຖານະບົດບາດ ແລະ ອິດທິພົນຂອງ ສປ ຈີນ ນັບມື້ນັບໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ພັກ, ລັດຖະບານ ແລະ ປະຊາຊົນລາວ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ ບັນດາຜົນສຳເລັດອັນໃຫຍ່ຫຼວງ ທີ່ພັກ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ຍາດມາໄດ້ໃນຕະຫຼອດໄລຍະ 105 ປີທີ່ຜ່ານມາ, ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນສະຫລາດສ່ອງໃສຂອງ ພັກກອມມູນິດຈີນ, ປະຊາຊົນຈີນອ້າຍນ້ອງ ຈະສາມາດບັນລຸໝາກຜົນອັນໃຫຍ່ຫຼວງໃນການຟື້ນຟູຄວາມສີວິໄລຂອງຊົນຊາດຈີນ, ບັນລຸເປົ້າໝາຍ 100 ປີ ເທດການທີສອງ, ນຳເອົາປະເທດຊາດກ້າວຂຶ້ນສັງຄົມນິຍົມຢ່າງໜັກແໜ້ນ ຕາມສີສັນພິເສດຂອງຈີນ ຢ່າງແນ່ນອນ.

ພວກຂ້າພະເຈົ້າ ມີຄວາມເອກອ້າງທະນົງໃຈ ແລະ ປິຕິຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າ ເຖິງແມ່ນສະພາບການພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະມີການຜັນແປຢ່າງສະຫຼັບຊັບຊ້ອນກໍຕາມ, ແຕ່ພາຍໃຕ້ການນຳພາ ຂອງສອງສູນກາງພັກ ລາວ-ຈີນ, ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ນັບມື້ນັບກ້າວເຂົ້າສູ່ລວງເລິກ, ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ ແລະ ກາຍເປັນຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ທີ່ເຂັ້ມແຂງ ໝັ້ນຄົງແໜ້ນໃນທຸກສະພາບການຂອງຍຸກໃໝ່ ໃນປະຈຸບັນ, ເຊິ່ງໝາກຜົນດັ່ງກ່າວນັ້ນ ເກີດຂຶ້ນໄດ້ຍ້ອນຄວາມໄວ້ເນື້ອເຊື່ອໃຈທາງດ້ານການເມືອງໃນລະດັບສູງ ລະຫວ່າງ ສອງພັກ ລາວ-ຈີນ ແລະ ຄວາມເອົາໃຈໃສ່ຊີ້ນຳຢ່າງໃກ້ຊິດຂອງ ການນຳສູງສຸດ ສອງພັກ, ສອງລັດ ລາວ-ຈີນ ອັນໄດ້ເຮັດໃຫ້ການຮ່ວມມືໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ, ເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ ແລະ ຂະແໜງ ການ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຈີນ.

ພັກ, ລັດ ແລະ ປະຊາຊົນລາວ ຢືນຢັນຢ່າງໜັກແໜ້ນວ່າ ຈະເຮັດສຸດຄວາມສາມາດຂອງຕົນ ຮ່ວມກັບພັກ, ລັດ ແລະ ປະຊາຊົນຈີນອ້າຍນ້ອງ ເພື່ອປົກປັກຮັກສາ ແລະ ເພີ່ມພູນຄູນສ້າງສາຍພົວພັນອັນເປັນມູນເຊື້ອທີ່ດີງາມ ລະຫວ່າງ ສອງປະເທດ ລາວ-ຈີນ ໃຫ້ສືບຕໍ່ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ ເພື່ອປະກອບສ່ວນເຂົ້າໃນການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ເພື່ອປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ຄວາມຍຸຕິທຳ ແລະ ການຮ່ວມມືເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ຂໍອວຍພອນໃຫ້ ພັກກອມມູນິດຈີນ ຈົ່ງສືບຕໍ່ຍາດໄດ້ຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດແຫ່ງການສ້າງສາສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ໃນຍຸກສະໄໝໃໝ່, ສ້າງປະເທດຈີນໃຫ້ນັບມື້ນັບມີຄວາມເຂັ້ມແຂງ, ທັນສະໄໝ ແລະ ມີຄວາມຮຸ່ງເຮືອງສີວິໄລ.

ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານຕາມທິດ 4 ດີ ແລະ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ທີ່ເຂັ້ມແຂງໝັ້ນຄົງແໜ້ນໃນທຸກສະພາບການຂອງຍຸກໃໝ່ ຈົ່ງໝັ້ນຄົງຂະໜົງແກ່ນຕະຫຼອດໄປ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

### 1. ບົດຄວາມສະເຫຼີມສະຫຼອງວັນສ້າງຕັ້ງຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 43 ປີ

ວັນທີ 29 ມິຖຸນາ 2026 ແມ່ນຂີດໝາຍປະຫວັດສາດອັນສະຫງ່າງາມ, ມີຄວາມໝາຍເລິກເຊິ່ງ ແລະ ກ້າວໜ້າຢ່າງຍິ່ງ ຂອງການເຄື່ອນໄຫວວຽກງານການຕ່າງປະເທດຂອງພັກປະຊາຊົນປະຕິວັດລາວ, ເຊິ່ງເປັນວັນທີ່ ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຮັບການສ້າງຕັ້ງ ຄົບຮອບ 43 ປີ ບົນພື້ນຖານຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງພາລະກິດປະຕິວັດໃນໄລຍະໃໝ່. ຕະຫຼອດໄລຍະເສັ້ນທາງແຫ່ງການເຕີບໃຫຍ່ຂະຫຍາຍຕົວ, ບຸກທະລຸ ແລະ ຜ່ານຜ່າທຸກອຸປະສັກຕະຫຼອດມາ, ຄຕພ ໄດ້ຢັ້ງຢືນເຖິງບົດບາດອັນໜັກແໜ້ນ ໃນຖານະເປັນອົງການຈັດຕັ້ງໜຶ່ງຂອງພັກ ຂຶ້ນກັບຄະນະບໍລິຫານງານສູນກາງພັກ, ມີຖານະທຽບເທົ່າຄະນະຂອງພັກຂັ້ນສູນກາງພັກ ໄດ້ຢ່າງສົມກຽດ.

ຕະຫຼອດສີ່ທົດສະວັດ, ຄຕພ ສາມາດເຮັດໜ້າທີ່ການເປັນເສນາທິການໂດຍກົງ ແລະ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ ຈາກຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໃນການຄົ້ນຄວ້າແຜນຍຸດທະສາດ, ແນວທາງນະໂຍບາຍການພົວພັນຕ່າງປະເທດຂອງພັກ. ພ້ອມກັນນັ້ນ ຍັງເຮັດໜ້າທີ່ຕາງໜ້າສູນກາງພັກ ໃນການພົວພັນ-ຮ່ວມມືກັບພັກການເມືອງຂອງຕ່າງປະເທດ ໃນຂອບເຂດສອງຝ່າຍ ແລະ ຫຼາຍຝ່າຍ ຕາມການມອບໝາຍຢ່າງມີໝາກຜົນຕົວຈິງ.

ຄຕພ ໄດ້ກາຍເປັນບ່ອນອີງອັນໜັກແໜ້ນ ແລະ ເປັນເຂັມທິດເຍືອງທາງໃຫ້ແກ່ການຈັດຕັ້ງ, ການເຄື່ອນໄຫວວຽກງານການຕ່າງປະເທດດ້ານພັກ ແລະ ການທູດປະຊາຊົນ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງຂຶ້ນ ຢ່າງບໍ່ຢຸດຢັ້ງ ດ້ວຍພາລະບົດບາດອັນເປັນເອກະລັກນີ້ ກໍຄືການເປັນເຈົ້າການຊີ້ນໍາ, ຄຸ້ມຄອງການເຄື່ອນໄຫວວຽກງານພົວພັນຕ່າງປະເທດຂອງອົງການຈັດຕັ້ງພັກ ແລະ ການທູດປະຊາຊົນ ໃຫ້ມີຄວາມເປັນເອກະພາບ ໂດຍປະຕິບັດຕາມຫຼັກການຜ່ານປະຕູດຽວ ຢ່າງເຄັ່ງຄັດ.

**ເວົ້າສະເພາະ ຂົງເຂດວຽກງານວິຊາສະເພາະ ໃນປີ 2026 ຜ່ານມາ ພາຍໃຕ້ການນໍາພາ-ຊີ້ນໍາ ຂອງອົງຄະຄະນະພັກຊຸດໃໝ່, ຄຕພ ສາມາດຍາດໄດ້ຜົນສໍາເລັດອັນພົ້ນເດັ່ນໃນຫຼາຍດ້ານເຊັ່ນ:**

**ເປັນເສນາທິການທາງດ້ານເນື້ອໃນ ແລະ ໃຈກາງປະສານງານຢ່າງຮອບດ້ານ ກະກຽມໃຫ້ແກ່ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່** ເຂົ້າຮ່ວມພິທີເປີດນໍາໃຊ້ ທ່າທຽບເຮືອເລກ 3, ທ່າເຮືອສາກົນ ລາວ-ຫວຽດ ແລະ ພິທີສະເຫຼີມສະຫຼອງວັນປົດປ່ອຍພາກໃຕ້ຫວຽດນາມ ຄົບຮອບ 50 ປີ ຢູ່ ສສ.ຫວຽດນາມ; ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນຊາດ ສສ.ຫວຽດນາມ ຄົບຮອບ 80 ປີ; ເຂົ້າຮ່ວມພິທີສະເຫຼີມສະຫຼອງໄຊຊະນະສົງຄາມຕ້ານຟາຊິດ ຄົບຮອບ 80 ປີ ຢູ່ ສປ.ຈີນ ແລະ ການຢ້ຽມຢາມຢ່າງເປັນທາງການ ສປ.ຈີນ; ໄດ້ກະກຽມ ແລະ ສົ່ງຄະນະຜູ້ແທນຂັ້ນສູງຂອງພັກ ເຂົ້າຮ່ວມກອງປະຊຸມສຸດຍອດ ຄັ້ງທີ 16 ສອງພັກ ລາວ-ກໍາປູເຈຍ ແລະ ເຂົ້າຮ່ວມການພົບປະສຸດຍອດຜູ້ນໍາ 03 ພັກ ລາວ-ຫວຽດນາມ-ກໍາປູເຈຍ ຄັ້ງທີ 04 ທີ່ຣາຊະອານາຈັກກໍາປູເຈຍ; ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 80 ປີ ທີ່ພຽງຢາງ, ສປປ ເກົາຫຼີ; **ໄດ້ເປັນເຈົ້າພາບ**ຈັດກອງປະຊຸມພົບປະສອງກົມການເມືອງ ລາວ-ຫວຽດນາມ ຢູ່ ສປປ ລາວ ໃນທ້າຍປີ 2025; ຕ້ອນຮັບການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງຫຼາຍຄະນະຜູ້ແທນຂັ້ນສູງຂອງພັກ ຈາກຕ່າງປະເທດເປັນຕົ້ນ: ການມາຢ້ຽມຢາມລັດຖະກິດ ສປປ ລາວ ຂອງ ສະຫາຍ ໂຕເລີມ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ; ຕ້ອນຮັບ ສະຫາຍ ເຈີນ ເກິ່ມ ຕູ໊, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງພັກ, ລັດ ສສ.ຫວຽດນາມ ໃນໂອກາດເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ; ຕ້ອນຮັບການຊົມເຊີຍຂອງຜູ້ຕາງໜ້າພິເສດຂອງສູນກາງພັກກອມມູນິດຫວຽດນາມ ແລະ ຄະນະຜູ້ຕາງໜ້າພິເສດຂອງ ສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຈີນ ມາຊົມເຊີຍກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XII ຂອງພັກ ປປ ລາວ. ພ້ອມດຽວກັນນັ້ນ, ຍັງໄດ້ເຂົ້າຮ່ວມກອງປະຊຸມສໍາມະນາວິທະຍາສາດລະຫວ່າງພັກກອມມູນິດຈີນກັບບັນດາພັກ

ການເມືອງອ້ອມຂ້າງຈີນ ທີ່ ສປ ຈີນ; ກອງປະຊຸມເວທີປຶກສາຫາລືຄວາມໝັ້ນຄົງໃນພາກພື້ນເອີຣົບ-ອາຊີ ຢູ່ເມືອງເປີມ, ສ.ຣັດເຊຍ; ກອງປະຊຸມສະພາວັດທະນະທຳອາຊີ ຄັ້ງທີ IV ໃນຂອບ ICAPP ແລະ ກອງປະຊຸມສາກົນໃນຫົວຂໍ້: ບົດບາດຂອງພາກພື້ນຕໍ່ຄວາມໝັ້ນຄົງໂລກ ທີ່ອາແຊກໄບຊານ; ກອງປະຊຸມປຶກສາຫາລືການເມືອງອາຊີ-ເອີຣົບ ທີ່ບູດາເປສ, ຮົງກາຣີ; ກອງປະຊຸມສາກົນ ຄັ້ງທີ II ໃນຫົວຂໍ້: "ອະທິປະໄຕແຫ່ງລັດ ແລະ ຫຼັກການພົວພັນສາກົນ ໃນສະພາບການຂອງໂລກຫຼາຍຂົ້ວອຳນາດ ແລະ ຄວາມຫຼາກຫຼາຍ ໃນສະຕະວັດທີ 21" ທີ່ເບຣສ, ເບລາຣຸດຊີ; ກອງປະຊຸມປຶກສາຫາລື "ບົດບາດຂອງບັນດາພັກການເມືອງໃນການສ້າງປະຊາຄົມອາຊຽນ ທີ່ຮ່າໂນ້ຍ, ສສ.ຫວຽດນາມ; ກອງປະຊຸມຄະນະປະຈຳໄອແຄັບ ຄັ້ງທີ 45 ທີ່ອູລາບາຕໍ, ມົງໂກລີ.

ບັນດາຜົນສຳເລັດຂອງການເຄື່ອນໄຫວດ້ານການຕ່າງປະເທດດ້ານພັກ ໄດ້ເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມໝັ້ນຄົງຂອງຊາດ ແລະ ສ້າງສະພາບແວດລ້ອມສາກົນທີ່ເອື້ອອຳນວຍໃຫ້ແກ່ພາລະກິດການປົກປັກຮັກສາ ແລະ ພັດທະນາປະເທດຊາດ, ກໍຄືປະກອບສ່ວນຍົກສູງບົດບາດອິດທິພົນຂອງພັກປະຊາຊົນປະຕິວັດລາວ ໃນເວທີສາກົນໃຫ້ສູງຂຶ້ນຢ່າງຕໍ່ເນື່ອງ, ເຊິ່ງປັດຈຸບັນ ພັກ ປປ ລາວ ມີການພົວພັນກັບ 145 ພັກການເມືອງ ໃນ 85 ປະເທດທົ່ວໂລກ; ສ້າງຕັ້ງສະມາຄົມມິດຕະພາບກັບຕ່າງປະເທດທັງໝົດມີ 20 ສະມາຄົມ ແລະ 1 ຄະນະສັນຕິພາບ ແລະ ສາມັກຄີລາວກັບຕ່າງປະເທດ; ສ່ວນຢູ່ຂັ້ນທ້ອງຖິ່ນຍັງໄດ້ສ້າງຕັ້ງສະມາຄົມມິດຕະພາບ ລາວ-ຫວຽດນາມ, ລາວ-ຈີນ ຢູ່ 18 ແຂວງຂອງລາວ ແລະ ສະມາຄົມມິດຕະພາບ ລາວ-ກຳປູເຈຍ ຢູ່ແຂວງຈຳປາສັກ ແລະ ອັດຕະປື.

ນອກຈາກນີ້, ຜົນສຳເລັດທີ່ສຳຄັນໃນປີ ຜ່ານມາ ແມ່ນການນຳເອົາຜົນສຳເລັດກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງອົງຄະນະພັກ ຄຕພ ເຊິ່ງໄດ້ມີການເລືອກຕັ້ງເອົາຄະນະບໍລິຫານງານພັກຊຸດໃໝ່ ແລະ ຮັບຮອງເອົາ 5 ແຜນງານ 28 ໂຄງການ ສຳລັບ 05 ປີ; ພ້ອມກັນນັ້ນ, ກໍໄດ້ກ້າວເຂົ້າສູ່ໄລຍະໃໝ່ແຫ່ງການຫັນປ່ຽນຢ່າງຕັ້ງໜ້າ ໄດ້ສຳເລັດການປັບປຸງກົງຈັກການຈັດຕັ້ງພາຍໃນຢ່າງຮອບດ້ານ, ການແຕ່ງຕັ້ງ ແລະ ສັບຊ້ອນຕຳແໜ່ງບໍລິຫານຂັ້ນຫົວໜ້າກົມ ແລະ ພະນັກງານຫຼັກແຫຼ່ງ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ຫັນເປັນທັນສະໄໝ ຜ່ານກົນໄກປະຕູດຽວ ໃຫ້ມີຄຸນນະພາບສູງຂຶ້ນເລື້ອຍໆ, ສາມາດເປັນເສນາທິການທີ່ແຫຼມຄົມ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນໄລຍະໃໝ່ຢ່າງມີໄຊ.

ການສະເຫຼີມສະຫຼອງວັນສ້າງຕັ້ງ ຄົບຮອບ 43 ປີ, ໃນປີ 2026 ນີ້ ແມ່ນດຳເນີນໄປໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນລາວທັງຊາດ ພວມຕັ້ງໜ້າບຸກບືນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຢ່າງມີໝາກຜົນ. ຄະນະນຳ, ພະນັກງານ-ລັດຖະກອນ ຂອງ ຄຕພ ທຸກຄົນ ໄດ້ມີຄວາມສາມັກຄີ, ເອກະພາບສູງ ແລະ ຄວາມມຸ່ງໝັ້ນອັນແຮງກ້າ ທີ່ຈະສືບຕໍ່ຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ຍົກສູງລະດັບວິຊາສະເພາະຢ່າງຮອບດ້ານ ເພື່ອເຮັດສຳເລັດໜ້າທີ່ເປັນ **"ເສນາທິການ"** ທີ່ສະຫຼາດສ່ອງໃສໃຫ້ແກ່ສູນກາງພັກ.

ໃນເສັ້ນທາງແຫ່ງການກ້າວໄປຂ້າງໜ້າ, ເຖິງວ່າສະພາບການສາກົນ ແລະ ພາກພື້ນ ຈະມີການຜັນແປໄປຢ່າງສັບສົນ ແລະ ຄາດເດົາໄດ້ຍາກ, ແຕ່ບົນພື້ນຖານມູນເຊື້ອອັນສະຫງ່າງາມ ແລະ ບົດຮຽນອັນອຸດົມສົມບູນ ທີ່ຖອດຖອນໄດ້ຕະຫຼອດ 43 ປີ ຜ່ານມາ ແລະ ພາຍໃຕ້ການນຳພາ-ຊີ້ນຳຢ່າງໃກ້ຊິດ ຂອງ ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຄະນະພົວພັນຕ່າງປະເທດສູນກາງພັກ ຈະສືບຕໍ່ຍົກສູງຄວາມຮັບຜິດຊອບຂອງຕົນ ໃນການເປັນເສນາທິການດ້ານວຽກງານຕ່າງປະເທດຂອງພັກ ໂດຍສະເພາະການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ **ຕາມຄຳຂວັນ "ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ ກ້າວຂຶ້ນສູ່ສັງຄົມນິຍົມ"** ໃຫ້ປະກົດຜົນເປັນຈິງ.

## 2. ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ເຂົ້າຮ່ວມກອງປະຊຸມສາກົນ ຄັ້ງທີ 2 ທີ່ ປະເທດ ເບລາຣຸດຊີ



ໂດຍຕອບສະໜອງຕາມການເຊື້ອເຊີນຂອງພັກເບລາຢາຣຸດສ໌, ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນໍາໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕາງໜ້າໃຫ້ ສູນກາງພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສາກົນ ຄັ້ງທີ 2 ໃນຫົວຂໍ້: “ອະທິປະໄຕແຫ່ງລັດ ແລະ ຫຼັກການພົວພັນ ສາກົນ ໃນສະພາບການຂອງໂລກຫຼາຍຂົ້ວອໍານາດ ແລະ ຄວາມຫຼາກຫຼາຍ ໃນສະຕະວັດທີ 21” (State Sovereignty and Principles of International Relations in the Context of Multipolarity and Diversity in the 21st Century) ແຕ່ວັນທີ 27-30 ພຶດສະພາ 2026 ທີ່ ສ. ເບລາຣຸດຊີ.

ກອງປະຊຸມດັ່ງກ່າວ ແມ່ນຂໍ້ລິເລີ່ມຂອງ ພັກເບລາຢາຣຸດສ໌ ທີ່ໄດ້ຈັດຂຶ້ນເປັນຄັ້ງທໍາອິດໃນປີ 2025 ເພື່ອເປັນ ເວທີປຶກສາຫາລື, ແລກປ່ຽນທັດສະນະ ແລະ ຖອດຖອນບົດຮຽນ ລະຫວ່າງ ພັກການເມືອງ, ຜູ້ນໍາທາງການເມືອງ, ນັກຄົ້ນຄວ້າ, ນັກວິຊາການ, ກໍາລັງຮັກຊາດ ແລະ ກ້າວໜ້າຂອງບັນດາພັກການເມືອງໃນໂລກ ກ່ຽວກັບການປົກປ້ອງ ອະທິປະໄຕແຫ່ງລັດ, ຕ້ານການແຊກແຊງກິດຈະການພາຍໃນຂອງບັນດາລັດເອກະລາດ ເຊັ່ນ: ການເລືອກຕັ້ງ, ການ ຕ້ານລັດທິລ່າເມືອງຂຶ້ນແບບໃໝ່, ການປົກປ້ອງຜົນປະໂຫຍດແຫ່ງຊາດ, ບັນຫາຄວາມໝັ້ນຄົງຂອງພາກພື້ນ ແລະ ສາກົນ ໃນໂລກທີ່ມີຫຼາຍຂົ້ວອໍານາດ ຊຶ່ງມີຄະນະຜູ້ແທນຈາກ 17 ພັກການເມືອງ, ຫຼາຍກວ່າ 40 ທ່ານ ເຂົ້າຮ່ວມ ໂດຍມາຈາກທະວີບເອີຣົບ, ອາຊີ, ອາຟຣິກາ ແລະ ອາເມຣິກາລາຕິນ.

ໃນກອງປະຊຸມ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ມາຍັງ ພັກເບລາຢາຣຸດສ໌ ຕໍ່ ການເຊື້ອເຊີນ ແລະ ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແກ່ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ແລະ ຕີລາຄາສູງ ຕໍ່ພັກ ເບລາຢາຣຸດສ໌ ໃນການຈັດກອງປະຊຸມທີ່ມີຄວາມໝາຍ, ຄວາມສໍາຄັນໃນຄັ້ງນີ້, ພ້ອມທັງຍົກໃຫ້ເຫັນເຖິງຄວາມສໍາຄັນ ຂອງອະທິປະໄຕແຫ່ງລັດ, ສັນຕິພາບ ແລະ ຄວາມໝັ້ນຄົງ, ຍົກສູງການພົວພັນຮ່ວມມື ລະຫວ່າງ ບັນດາພັກການເມືອງ ກໍຄືບັນດາປະເທດໃນໂລກທີ່ໃຫ້ການສະໜັບສະໜູນການຫັນເປັນໂລກຫຼາຍຂົ້ວທີ່ນັບມື້ຈະແຈ້ງຂຶ້ນ ບົນພື້ນຖານແຫ່ງ ການເຄົາລົບອະທິປະໄຕແຫ່ງລັດ, ກົດບັດຂອງສະຫະປະຊາຊາດ ແລະ ກົດໝາຍສາກົນ ເພື່ອຮ່ວມກັນແກ້ໄຂບັນດາສິ່ງ ທ້າທາຍຕ່າງໆທີ່ສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ການພັດທະນາຂອງບັນດາປະເທດ. ພ້ອມດຽວກັນ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ຢໍ້າຄືນທັດສະນະ ແລະ ນະໂຍບາຍການຕ່າງປະເທດ ອັນສະເໝີຕົ້ນສະເໝີປາຍຂອງ ພັກປະຊາຊົນ ປະຕິວັດລາວ ໃນການເປີດກວ້າງການພົວພັນຮ່ວມມືກັບບັນດາພັກການເມືອງແບບຫຼາຍທິດ, ຫຼາຍຝ່າຍ ໃນພາກພື້ນ ແລະ ໂລກ.

ນອກນັ້ນ, ຄະນະຜູ້ແທນພັກ ປປ ລາວ ກໍ່ໄດ້ສືບຕໍ່ມີການເຄື່ອນໄຫວ ຮັດແໜ້ນການພົວພັນຮ່ວມມືກັບ 2 ພັກ ການເມືອງຂອງ ສ. ເບລາຣຸດຊີ ຄື: ພັກເບລາຢາຣຸດສ໌ ແລະ ພັກກອມມູນິດເບລາຣຸດຊີ. ເຊິ່ງໃນຕອນເຊົ້າວັນທີ 29 ພຶດສະພາ 2026, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ນໍາພາຄະນະເຂົ້າຢ້ຽມຂໍ່ານັບ ທ່ານ ນາງ ໂອນກາ ເຊໂມດານນົບວາ (Olga CHEMODANOVA), ປະທານພັກເບລາຢາຣຸດສ໌ ທີ່ ຫ້ອງວ່າການແຂວງເບຣັດສທ໌, ໂດຍໄດ້ສະແດງຄວາມ

ຂອບໃຈຢ່າງຈິງໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ໄດ້ແຈ້ງກ່ຽວກັບສະພາບພົ້ນເດັ່ນ ໃນ ສປປ ລາວ, ໂດຍສະເພາະ ຜົນສຳເລັດການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ປປ ລາວ, ຜົນສຳເລັດການເລືອກຕັ້ງ ສະພາແຫ່ງຊາດ ແລະ ສະພາທ້ອງຖິ່ນ, ຜົນສຳເລັດການຮັບຮອງເອົາ ຄະນະລັດຖະບານຊຸດໃໝ່ ແລະ ຜົນສຳເລັດການດຳ ເນີນກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ XII. ນອກນີ້, ຍັງໄດ້ແຈ້ງໃຫ້ຊາບວ່າ ພັກ ປປ ລາວ ໄດ້ໃຫ້ຄວາມສຳຄັນເປັນຢ່າງຍິ່ງໃນການເສີມສ້າງ ແລະ ຮັດແໜ້ນການພົວພັນຮ່ວມມືກັບ ພັກເບລາ ຢາຣຸດສ໌ ນັບແຕ່ມີການພົວພັນນຳກັນໃນປີ 2018 ເປັນຕົ້ນມາ; ໄດ້ຕີລາຄາການພົວພັນຮ່ວມມື ລະຫວ່າງ ສອງປະເທດ ລາວ-ເບລາຣຸດຊີ ບົນພື້ນຖານມູນເຊື້ອແຫ່ງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມທີ່ມີມາແຕ່ດົນນານ ແລະ ປະຈຸບັນ ກຳລັງໄດ້ຮັບການເສີມ ຂະຫຍາຍຢ່າງຕໍ່ເນື່ອງ; ໄດ້ສະແດງຄວາມຊົມເຊີຍຕໍ່ການພົວພັນທີ່ກຳລັງໄດ້ຮັບ ການພັດທະນາ ລະຫວ່າງ ສູນກາງຊາວໜຸ່ມ ປປ ລາວ ແລະ ຂະບວນການຊາວໜຸ່ມ ອິສກຣາ (Iskra) ຂອງ ພັກເບລາ ຢາຣຸດສ໌, ເຊິ່ງມີແຜນຈະລົງນາມໃນ ເອກະສານການຮ່ວມມື ໃນອະນາຄົດອັນໃກ້ນີ້; ໄດ້ນຳເອົາຄວາມຢື້ຢາມຖາມຂ່າວ ຈາກການນຳຂັ້ນສູງຂອງພັກ ປປ ລາວ ເຖິງ ທ່ານປະທານພັກ ກໍຄື ບັນດາການນຳພັກ ເບລາຢາຣຸດສ໌, ພ້ອມທັງເຊື້ອເຊີນ ທ່ານປະທານພັກ ໄປຢ້ຽມຢາມ ສປປ ລາວ ໃນເວລາທີ່ເຫັນວ່າສະດວກ. ໂອກາດນີ້, ທ່ານ ນາງ ໂອນກາ ເຊໂມດານົບ ວາ ກໍໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງ ຕໍ່ການເຂົ້າຮ່ວມກອງປະຊຸມ ແລະ ເຄື່ອນໄຫວ ຢ້ຽມຢາມ ສ. ເບລາຣຸດຊີ ຂອງຄະນະຜູ້ແທນພັກ ປປ ລາວ ໃນຄັ້ງ ນີ້; ຕີລາຄາສູງຕໍ່ການພົວພັນອັນດີທີ່ມີຮ່ວມກັນ ຕະຫຼອດໄລຍະຜ່ານມາ ແລະ ມີຄວາມເຫັນດີເປັນເອກະພາບຮ່ວມກັບຝ່າຍລາວ ໃນການເສີມຂະຫຍາຍການພົວພັນ ຮ່ວມມືໃຫ້ມີໝາກຜົນສູງຂຶ້ນກວ່າເກົ່າໃນອະນາຄົດ.

### 3. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມກອງປະຊຸມສາກົນ ທີ່ ສສ ຫວຽດນາມ







ໂດຍຕອບສະໜອງຕາມຄຳເຊີນຂອງ ພັກກອມມູນິດຫວຽດນາມ, ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນຳ ໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເດີນ ທາງເຂົ້າຮ່ວມກອງປະຊຸມສຳມະນາສາກົນ ໃນຫົວຂໍ້ "ການສ້າງຄວາມໄວ້ເນື້ອເຊື່ອໃຈ ລະຫວ່າງ ບັນດາພັກການເມືອງ ອາຊີຕາເວັນອອກສ່ຽງໃຕ້ ເພື່ອຄວາມກົມກຽວ, ເຂັ້ມແຂງ ແລະ ເປັນເຈົ້າຕົນເອງຫຼາຍຂຶ້ນ ຂອງປະຊາຄົມອາຊຽນ" ເຊິ່ງ ຈັດຂຶ້ນທີ່ ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ ໃນລະຫວ່າງວັນທີ 7-9 ມິຖຸນາ 2026 ພາຍໃຕ້ການເປັນເຈົ້າພາບ ຂອງພັກກອມມູນິດຫວຽດນາມ ແລະ ການເຂົ້າຮ່ວມຂອງ ບັນດາພັກການເມືອງປະເທດອາຊີຕາເວັນອອກສ່ຽງໃຕ້.

ກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດແຫ່ງມິດຕະພາບ ໂດຍ ສະຫາຍ ເລ ຮວາຍ ຈຸງ, ກຳມະການກົມການ ເມືອງສູນກາງພັກ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສສ ຫວຽດນາມ ໄດ້ຂຶ້ນກ່າວເປີດກອງປະຊຸມ ໂດຍໄດ້ ຊີ້ໃຫ້ເຫັນເຖິງຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແລະ ຊຸກຍູ້ການເສີມຂະຫຍາຍບົດບາດຂອງບັນດາພັກການເມືອງຂອງ ພາກພື້ນ ໃນການຊຸກຍູ້ເສີມຂະຫຍາຍການພົວພັນຮ່ວມມືໃນຂອບອາຊຽນ ໃຫ້ນັບມື້ເຕີບໃຫຍ່ເຂັ້ມແຂງ. ຫຼັງຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນ ແລກປ່ຽນຄຳຄິດເຫັນ ແລະ ປຶກສາຫາລື ໂດຍປິ່ນອ້ອມ 3 ຫົວຂໍ້ຍ່ອຍ ຄື : 1) ການສ້າງຄວາມໄວ້ເນື້ອເຊື່ອໃຈ ລະຫວ່າງ ບັນດາພັກການເມືອງ ໃນອາຊີຕາເວັນອອກສ່ຽງໃຕ້ ເພື່ອເພີ່ມທະວີຄວາມ ກົມກຽວ, ຄ່ອງແຄ້ວ ແລະ ການເພິ່ງພາຕົນເອງຂອງອາຊຽນ; 2) ການເສີມຂະຫຍາຍບົດບາດຂອງພັກການເມືອງ ເພື່ອ ຍົກລະດັບການຮ່ວມມືຂອງອາຊຽນ ແລະ ການຈັດຕັ້ງປະຕິບັດວິໄສທັດ 2045 ຂອງປະຊາຄົມອາຊຽນ ໃຫ້ປະກົດຜົນ ເປັນຈິງ; ແລະ 3) ບົດຮຽນໃນການຄຸ້ມຄອງ ແລະ ການເພີ່ມທະວີການຮ່ວມມື ລະຫວ່າງ ບັນດາພັກການເມືອງ ໃນ

ຂະບວນການສ້າງປະຊາຄົມອາຊຽນ; ເຊິ່ງບັນດາພັກການເມືອງກໍໄດ້ ແລກປ່ຽນທັດສະນະ ແລະ ຢືນຢັນເຖິງຄວາມມຸ່ງມາດປາຖະໜາ ຂອງບັນດາພັກການເມືອງ ໃນການເສີມສ້າງປະຊາຄົມອາຊຽນ ແລະບັນລຸບັນດາຄາດໝາຍ ກໍຄື ວິໄສທັດ ຂອງອາຊຽນ.

ໃນກອງປະຊຸມ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ປະກອບຄຳຄິດຄຳເຫັນ ໂດຍໄດ້ຕີລາຄາສູງ ຕໍ່ ບົດບາດຂອງພັກກອມມູນິດຫວຽດນາມ ກໍຄື ການປະກອບສ່ວນໃນການສ້າງກົນໄກກອງປະຊຸມ ທີ່ມີຄວາມໝາຍສຳຄັນໃນຄັ້ງນີ້; ສະຫາຍ ໄດ້ສະເໜີທິດທາງທີ່ສຳຄັນ ໃນການຊຸກຍູ້ສົ່ງເສີມການພົວພັນຮ່ວມມື ລະຫວ່າງ ບັນດາພັກການເມືອງ ເປັນຕົ້ນແມ່ນ ການຊຸກຍູ້ກົນໄກການພົບປະກັນ ຢ່າງເປັນປົກກະຕິ, ການເສີມຂະຫຍາຍບົດບາດຂອງພັກການເມືອງ ໃນການເປັນກະບອກສຽງ ແລະ ເປັນຂົວຕໍ່ໃນການຊຸກຍູ້ການເຊື່ອມໂຍງເສດຖະກິດ-ສັງຄົມ ໃນພາກພື້ນ ແລະ ການສົ່ງເສີມ "ຄວາມເປັນແກນກາງຂອງອາຊຽນ" (ASEAN Centrality) ເພື່ອຮັບມືກັບສະພາບການພາກພື້ນ ແລະ ສາກົນ ທີ່ມີຄວາມສັບສົນໃນປະຈຸບັນ ກໍຄື ຮັບມືກັບບັນດາວິກິດການຕ່າງໆ ທັງໃນປະຈຸບັນ ແລະ ຕໍ່ໜ້າ.

**4. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມກອງປະຊຸມສາກົນ ທີ່ ສະຫະພັນຣັດເຊຍ**





ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນຳໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມຄະນະປະຈຳ ຄັ້ງທີ 3 ຂອງເວທີປຶກສາຫາລື ຂອງບັນດາຝ່າຍສະໜັບສະໜູນການຕໍ່ສູ້ຕ້ານການປະຕິບັດ ໃນສະໄໝໃໝ່ ຂອງລັດທິລ່າເມືອງຂຶ້ນແບບໃໝ່ ແລະ ກອງປະຊຸມສຳມະນາດ້ານກົດໝາຍສາກົນ ເຊັນປີເຕີສະເບີກ ຄັ້ງທີ 14 ຊຶ່ງຈັດຂຶ້ນ ທີ່ ເມືອງເຊັນປີເຕີສະເບີກ, ສະຫະພັນຣັດເຊຍ ໃນລະຫວ່າງວັນທີ 24-26 ມິຖຸນາ 2026 ໂດຍການເປັນເຈົ້າພາບຂອງ ພັກຣັດເຊຍເອກະພາບ, ມີຄະນະຜູ້ແທນຈາກພັກການເມືອງທີ່ເປັນຄະນະປະຈຳຂອງຂອບການຮ່ວມມືດັ່ງກ່າວ ແລະ ບັນດາພັກການເມືອງຄູ່ຮ່ວມສັງເກດການ ທີ່ມາຈາກທະວີບອາຊີ, ເອີຣົບ, ອາຟຣິກາ ແລະ ອາເມຣິກາລາຕິນ ຫຼາຍກວ່າ 20 ປະເທດ ເຂົ້າຮ່ວມ.

ໃນພິທີເປີດກອງປະຊຸມຄະນະປະຈຳ ຄັ້ງນີ້, ທ່ານ ອັນເດຣ ກລີມົບ, ສະມາຊິກສະພາສູງ ຂອງພັກຣັດເຊຍເອກະພາບ ໄດ້ກ່າວເນັ້ນໜັກ ກ່ຽວກັບ ສະພາບການສາກົນໃນປະຈຸບັນ, ບັນດາການເຄື່ອນໄຫວຜ່ານມາ ຂອງຂະບວນການ ແລະ ຊີ້ໃຫ້ເຫັນເຖິງ ຄວາມຈຳເປັນໃນການເສີມຂະຫຍາຍການພົວພັນຮ່ວມມື ຂອງບັນດາພັກການເມືອງ ເພື່ອຕ້ານການເຄື່ອນໄຫວຂອງລັດທິລ່າເມືອງຂຶ້ນແບບໃໝ່; ຈາກນັ້ນ ບັນດາຜູ້ແທນກອງປະຊຸມ ໄດ້ປະກອບຄຳເຫັນຕໍ່ກອງປະຊຸມ ໂດຍໄດ້ຍົກໃຫ້ເຫັນເຖິງພຶດຕິກຳຕົວຈິງຂອງລັດທິລ່າເມືອງຂຶ້ນແບບໃໝ່ ທີ່ພວມຂະຫຍາຍຕົວຢູ່ພາກພື້ນຕ່າງໆໃນໂລກ, ແລກປ່ຽນບົດຮຽນໃນການຕອບຕ້ານ ແລະ ຮັບມືກັບຜົນກະທົບຂອງລັດທິລ່າເມືອງຂຶ້ນແບບໃໝ່.

ໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຂອບໃຈຕໍ່ການເຊື້ອເຊີນຂອງພັກຣັດເຊຍເອກະພາບ ແລະ ໄດ້ຕີລາຄາສູງຕໍ່ກອງປະຊຸມດັ່ງກ່າວ; ສະຫາຍ ໄດ້ປະກອບຄຳເຫັນ ໂດຍເນັ້ນເຖິງຄຸນຄ່າຂອງຄວາມເປັນເອກະລາດ ແລະ ເສລີພາບຂອງລັດທີ່ມີອະທິປະໄຕ, ຊຶ່ງ ສປປ ລາວ ໄດ້ຜ່ານຂະບວນການຕໍ່ສູ້ຢ່າງຍືດເຍື້ອຍາວນານກ່ອນຈະບັນລຸເປົ້າໝາຍດັ່ງກ່າວ. ພ້ອມດຽວກັນນັ້ນ, ກໍໄດ້ຍ້ຳຄືນເຖິງ ຄວາມຈຳເປັນໃນການຮັກສາຫຼັກການພົວພັນລະຫວ່າງປະເທດ ບົນພື້ນຖານກົດບັດຂອງ ສະຫະປະຊາຊາດ ແລະ ກົດໝາຍສາກົນ ຢ່າງເຄັ່ງຄັດ; ສະຫາຍ ຍັງໄດ້ຢືນຢັນຄືນທັດສະນະທີ່ສະເໝີຕົ້ນສະເໝີປາຍຂອງພັກ ກໍຄື ແນວທາງການຕ່າງປະເທດຂອງ ສປປ ລາວ ໃນການສະໜັບສະໜູນ

ການຕໍ່ສູ້ຕ້ານກັບລັດທິລ່າເມືອງຂຶ້ນແບບໃໝ່ ແລະ ຊຸກຍູ້ຂະບວນການເພື່ອເສລີພາບຂອງບັນດາຊາດ ໃຫ້ສືບຕໍ່ຂະຫຍາຍຕົວຢ່າງກວ້າງຂວາງ.

ກອງປະຊຸມຄະນະປະຈຳເອທີດັ່ງກ່າວ ເປັນກົນໄກທີ່ມີຄວາມສຳຄັນ ໃນການເຕົ້າໂຮມເອົາບັນດາພັກການເມືອງໃນພາກພື້ນຕ່າງໆ ເພື່ອເປັນກະບອກສຽງ ແລະ ກຳລັງແຮງໃນການຕໍ່ສູ້ຕ້ານກັບລັດທິລ່າເມືອງຂຶ້ນແບບໃໝ່ ໂດຍມີພັກຣັດເຊຍເອກະພາບເປັນຜູ້ຂັບເຄື່ອນທີ່ສຳຄັນ ແລະ ພັກປະຊາຊົນປະຕິວັດລາວ ເປັນໜຶ່ງໃນສະມາຊິກຄະນະປະຈຳ ຊຶ່ງການເຂົ້າຮ່ວມກົນໄກດັ່ງກ່າວ ນອກຈາກຈະເປັນໂອກາດດີໃນການແລກປ່ຽນຖອດຖອນບົດຮຽນກັບພັກການເມືອງໃນໂລກ, ຍັງເປັນການສະແດງເຖິງຄວາມເອົາໃຈໃສ່ ປະກອບສ່ວນໃນຂອບດັ່ງກ່າວ ຢ່າງເປັນເຈົ້າການ, ເປັນການເສີມຂະຫຍາຍວຽກງານການຕ່າງປະເທດໃນຂອບຫຼາຍຝ່າຍຂອງພັກ ກໍຄື ເປັນການຍົກສູງຖານະບົດບາດຂອງພັກເຮົາ ໃນເອທີສາກົນ.

## 5. ພັກປະຊາຊົນປະຕິວັດລາວ ຮັດແໜ້ນການຮ່ວມມື ກັບ ພັກກອມມູນິດສະຫະພັນຣັດເຊຍ




ໃນໂອກາດເດີນທາງມາເຄື່ອນໄຫວວຽກງານ ທີ່ ສ. ຣັດເຊຍ, ໃນວັນທີ 24 ມິຖຸນາ 2026 ທີ່ ນະຄອນຫຼວງມົດສະກູ, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະຜູ້ແທນ ພັກ ປປ ລາວ ເຂົ້າພົບປະເຮັດວຽກກັບ ສະຫາຍ ດິມິຕຣີ ໂນວີກົບ (Dmitry Novikov), ຮອງປະທານພັກກອມມູນິດສະຫະພັນຣັດເຊຍ, ຮອງປະທານກຳມາທິການຕ່າງປະເທດ ຂອງ ສະພາດູມາ ແຫ່ງ ສ. ຣັດເຊຍ.

ໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງຕໍ່ການຕ້ອນຮັບອັນອົບອຸ່ນຖານມິດສະຫາຍທີ່ສະໜິດສະໜົມ ແລະ ໄດ້ແຈ້ງໃຫ້ຊາບຈຸດປະສົງຂອງການພົບປະສອງຝ່າຍໃນຄັ້ງນີ້ ເພື່ອປຶກສາຫາລື ແລະ ແລກປ່ຽນຄວາມຄິດເຫັນກ່ຽວກັບ ການພົວພັນຮ່ວມມືໃນໄລຍະຜ່ານມາ ໂດຍສະເພາະ ການຈັດຕັ້ງປະຕິບັດສັນຍາທີ່ສອງພັກໄດ້ຮ່ວມກັນລົງນາມໃນປີ 2023. ພ້ອມນັ້ນ, ກໍໄດ້ຝາກຄຳອວຍພອນອັນອົບອຸ່ນ ແລະ ຄວາມຢື້ຢາມຖາມຂ່າວຈາກ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ ເຖິງ ສະຫາຍ ເກນນາດີ ຊຸການົບ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດສະຫະພັນຣັດເຊຍ. ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງ ສອງພັກ ໃນໄລຍະຜ່ານມາ ແລະ ຊົມເຊີຍການເປັນເຈົ້າພາບຈັດກອງປະຊຸມສາກົນ ເພື່ອຕ້ານພວກຟາຊິດ ຄັ້ງທີ III ໃນທ້າຍເດືອນພຶດສະພາຜ່ານມາ ດ້ວຍຜົນສຳເລັດອັນຈົບງາມ, ເຊິ່ງພັກ ປປ ລາວ ກໍໄດ້ສົ່ງຄະນະຜູ້ແທນຂັ້ນສູງເຂົ້າຮ່ວມ. ສະຫາຍ ຍັງໄດ້ຖືໂອກາດດັ່ງກ່າວ ຕາງໜ້າ ພັກ ປປ ລາວ ເຊື້ອເຊີນ ຄະນະຜູ້ແທນ ພັກກອມມູນິດສະຫະພັນຣັດເຊຍ ຢ້ຽມຢາມ ສປປ ລາວ ໃນເວລາທີ່ເໝາະສົມ.

ໂອກາດນີ້, ສະຫາຍ ດິມິຕຣີ ໂນວີກົບ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍຕໍ່ການມາຢ້ຽມຢາມເຮັດວຽກຂອງ ຄະນະຜູ້ແທນພັກ ປປ ລາວ ຢູ່ ສ. ຣັດເຊຍ ໃນຄັ້ງນີ້ ແລະ ໄດ້ແຈ້ງໃຫ້ຊາບໂດຍສັງເຂບ ກ່ຽວກັບ ສະພາບພົ້ນເດັ່ນຂອງຣັດເຊຍ ໂດຍສະເພາະ ການກະກຽມເລືອກຕັ້ງສະມາຊິກສະພາດູມາ ໃນເດືອນກັນຍາ ທີ່ຈະມາເຖິງນີ້, ພ້ອມທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມ ລະຫວ່າງ ພັກກອມມູນິດສະຫະພັນຣັດເຊຍ ແລະ ພັກ ປປ ລາວ ຕະຫຼອດໄລຍະຜ່ານມາ, ເຊິ່ງຖືເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ຣັດເຊຍ-ລາວ ໃຫ້ນັບມື້ນັບແຕກດອກອອກຜົນຍິ່ງໆຂຶ້ນ. ໃນຂະນະດຽວກັນ, ສະຫາຍ ດິມິຕຣີ ໂນວີກົບ ຍັງໄດ້ອວຍພອນໃຫ້ຄະນະຜູ້ແທນພັກ ປປ ລາວ ຈົ່ງປະສົບຜົນສຳເລັດໃນການເດີນທາງເຄື່ອນໄຫວວຽກງານ ທີ່ ສ. ຣັດເຊຍ ໃນຄັ້ງນີ້.

**6. ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ບັນດາທູດຕ່າງປະເທດ ປະຈຳ ສປປ ລາວ**



ໃນວັນທີ 15 ມິຖຸນາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາຂອງ ທ່ານ ນາງ ເມວ ບາໂລ (Mel Barlow), ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສະຫະຣາຊະອານາຈັກ ອັງກິດ ແລະ ອຽກລັງເໜືອ ປະຈຳ ສປປ ລາວ, ພ້ອມດຽວກັນນນີ້, ທ່ານ ບຸນເຫຼືອ ພັນດານຸວົງ, ໄດ້ສະແດງຄວາມຍິນດີຕ້ອນຮັບ, ຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ທາງການທູດ ຢູ່ ສປປ ລາວ ຂອງ ທ່ານ ນາງ ເມວ ບາໂລ ໃນໄລຍະເວລາ 03 ປີຜ່ານມາ, ຊຶ່ງ ທ່ານທູດ ໄດ້ເຄື່ອນໄຫວຢ່າງຫ້າວຫັນ ແລະ ປະກອບສ່ວນສຳຄັນເຂົ້າໃນການຊຸກຍູ້, ສົ່ງເສີມການພົວພັນຮ່ວມມື ລະຫວ່າງ ອັງກິດ ແລະ ສປປ ລາວ ໃຫ້ມີຄວາມແໜ້ນແຟ້ນ ແລະ ເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆ. ພ້ອມນີ້, ກໍໄດ້ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຊ່ວຍເຫຼືອຈາກປະຊາຊົນ ແລະ ລັດຖະບານອັງກິດ ໃນໄລຍະຜ່ານມາ, ຊຶ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການສ້າງສາ ແລະ ພັດທະນາ ສປປ ລາວ.

ໃນວັນດຽວກັນ, ທ່ານ ບຸນເຫຼືອ ພັນດານຸວົງ ກໍໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ທ່ານ ເຄັນ ວາຊອງ (Kent VACHON), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ການາດາ ປະຈຳ ສປປ ລາວ, ໃນໂອກາດດັ່ງກ່າວ ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບ, ຊົມເຊີຍ ແລະ ຕີລາຄາສູງ ທີ່ ທ່ານ ເຄັນ ວາຊອງ ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງເປັນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ການາດາ ປະຈຳ ສປປ ລາວ, ພ້ອມທັງຊົມເຊີຍຕໍ່ການເຄື່ອນ ໄຫວຢ່າງຫ້າວຫັນຂອງ ທ່ານທູດ ໃນການປະກອບຊຸກຍູ້ ແລະ ເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ສປປ ລາວ ແລະ ການາດາ. ພ້ອມນີ້, ຍັງໄດ້ສະແດງຄວາມຂອບໃຈ ຕໍ່ການຊຸກຍູ້ ແລະ ສົ່ງເສີມການຮ່ວມມືດ້ານການຄ້າເສລີອາຊຽນ (FTA) ໃນຂອບການຮ່ວມມື ອາຊຽນ-ການາດາ ແລະ ການສົ່ງເສີມການຄ້າ-ການລົງທຶນ ສອງຝ່າຍ ທີ່ ການາດາ ໄດ້ຈັດຕັ້ງປະຕິບັດ ລະຫວ່າງ ກະຊວງກ່ຽວຂ້ອງຂອງ ລາວ ກັບ ຫ້ອງການສະພາການຄ້າ ການາດາ ປະຈຳ ສປປ ລາວ (Canadian Chambers of Commerce) ແລະ ສະແດງຄວາມຂອບໃຈລັດຖະບານ ແລະ ປະຊາຊົນ ການາດາ ທີ່ໃຫ້ທຶນຊ່ວຍເຫຼືອໂຄງການຕ່າງໆ ໃຫ້ແກ່ ສປປ ລາວ ຢ່າງຕໍ່ເນື່ອງ ໂດຍຜ່ານອົງການຈັດຕັ້ງ ພາກພື້ນ ແລະ ສາກົນ ເຊັ່ນ: ວຽກງານເກັບກູ້ລະເບີດບໍ່ທັນແຕກ (UXO), ການພັດທະນາຊັບພະຍາກອນມະນຸດຜ່ານທຶນການສຶກສາ SEED ແລະ ການຊ່ວຍເຫຼືອດ້ານມະນຸດສະທຳຕ່າງໆ.

**7. ຄະນະຜູ້ແທນ ພັກ ປປ ລາວ ເຂົ້າຮ່ວມກອງປະຊຸມຄະນະປະຈຳ ຂອງ ອົງການກອງປະຊຸມສາກົນ ຂອງບັນດາພັກການເມືອງໃນອາຊີ (ICAPP) ຄັ້ງທີ 45 ແລະ ກອງປະຊຸມປິ່ນອ້ອມ ທີ່ນະຄອນຫຼວງອູລານບາຕໍ, ປະເທດ ມົງໂກລີ**




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການສຳຮອງສູນກາງພັກ, ຮອງຫົວ ໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມຄະນະປະຈຳ ຂອງອົງການກອງປະຊຸມສາກົນ ຂອງບັນດາພັກການເມືອງໃນອາຊີ (ICAPP ຫຼື ໄອແຄັບ) ຄັ້ງທີ 45 ແລະ ກອງປະຊຸມປິ່ນອ້ອມ, ໃນລະຫວ່າງວັນທີ 25-28 ມິຖຸນາ 2026 ທີ່ນະຄອນຫຼວງອູ

ລານບາຕໍ, ປະເທດມົງໂກລີ ໂດຍການເປັນເຈົ້າພາບ ຂອງ ພັກປະຊາຊົນມົງໂກລີ ຮ່ວມກັບ ກອງເລຂາໄອແຄັບ, ມີຄະນະຜູ້ແທນຈາກພັກການເມືອງ ທີ່ເປັນສະມາຊິກຄະນະປະຈຳຂອງ 22 ພັກການເມືອງ ຈາກ 17 ປະເທດ ເຂົ້າຮ່ວມ.

ໃນກອງປະຊຸມຄັ້ງນີ້, ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ລົງເລິກແລກປ່ຽນ ກ່ຽວກັບ ແຜນການດຳເນີນງານຂອງໄອແຄັບ ແລະ ການຂະຫຍາຍຈຳນວນສະມາຊິກຄະນະປະຈຳ; ແລກປ່ຽນບົດຮຽນ ກ່ຽວກັບ ຂະບວນການພັດທະນາເຕັກໂນໂລຊີ ແລະ ດີຈີຕອນ ໂດຍໄດ້ຍົກໃຫ້ເຫັນວ່າ ການຫັນປ່ຽນດີຈີຕອນ ຖືເປັນໂອກາດອັນຍິ່ງໃຫຍ່, ເປັນສິ່ງທ້າທາຍ ແລະ ເປັນແຮງຂັບເຄື່ອນທີ່ສຳຄັນ ໃນຂະບວນການພັດທະນາໄປສູ່ການສ້າງອຸດສະຫະກຳ ແລະ ຄວາມທັນສະໄໝ; ເນັ້ນໜັກຄວາມສຳຄັນຂອງເຕັກໂນໂລຊີ ໃນການຂັບເຄື່ອນເສດຖະກິດ ຜ່ານລະບົບການຄ້າເອເລັກໂຕຣນິກ, ການເງິນດີຈີຕອນ, ການໃຫ້ບໍລິການພາກລັດແບບເອເລັກໂຕຣນິກ ແລະ ເສດຖະກິດດີຈີຕອນ; ຊຸກຍູ້ການເສີມຂະຫຍາຍການຮ່ວມມື ໃນພາກພື້ນ ແລະ ໃນໂລກ ເພື່ອຮ່ວມກັນຮັບມືກັບສິ່ງທ້າທາຍທີ່ມາພ້ອມການຫັນປ່ຽນດັ່ງກ່າວ ເປັນຕົ້ນ: ບັນຫາຄວາມໝັ້ນຄົງທາງໄຊເບີ, ຄວາມແຕກໂຕນທາງດີຈີຕອນ, ການຮັກສາຂໍ້ມູນ, ຂ່າວສານທີ່ບິດເບືອນ, ມາດຖານທາງຈາລິຍະທຳ ແລະ ຜົນກະທົບ ຕໍ່ ຮູບແບບການຈ້າງງານ.

ໃນໂອກາດນີ້, ຄະນະຜູ້ແທນ ພັກ ປປ ລາວ ໄດ້ປະກອບຄຳເຫັນໃນ 2 ກອງປະຊຸມດັ່ງກ່າວ ໂດຍຢືນຢັນຄືນຄວາມໝາຍໝັ້ນຂອງພັກ ປປ ລາວ ໃນການປະກອບສ່ວນເຄື່ອນໄຫວໃນຂອບວຽກໄອແຄັບ ແລະ ເຊື່ອໝັ້ນວ່າ ໄອແຄັບ ເປັນກົນໄກໜຶ່ງທີ່ສຳຄັນ ໃນການຊຸກຍູ້ສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືຫຼາຍຝ່າຍ ເພື່ອສົ່ງເສີມການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງ ມາສູ່ ພາກພື້ນ ກໍຄື ໃນໂລກ; ຍົກໃຫ້ເຫັນຄວາມສຳຄັນ ຂອງບັນດາພັກການເມືອງ ໃນການຮ່ວມມືກັນ ເພື່ອໃຫ້ການຫັນປ່ຽນດີຈີຕອນເກີດຂຶ້ນ ຢ່າງກວມລວມ, ດຸ່ນດ່ຽງ ແລະ ຍືນຍົງ ເພື່ອໃຫ້ບັນດາປະເທດອາຊີ ມີຄວາມເຊື່ອມໂຍງທາງດີຈີຕອນ, ສາມາດປັບຕົວຕໍ່ການປ່ຽນແປງທາງເຕັກໂນໂລຊີ ແລະ ສາມາດນຳໃຊ້ປະໂຫຍດຈາກນະວັດຕະກຳໄດ້ຢ່າງເຕັມສ່ວນ.

**8. ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຢ້ຽມຂ່ຳນັບການນຳຂັ້ນສູງຂອງ ພັກປະຊາຊົນມົງໂກລີ**




ໃນວັນທີ 26 ມິຖຸນາ 2026, ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການສຳຮອງສູນກາງພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ນຳພາຄະນະ ເຂົ້າພົບຢ້ຽມຂ່ຳນັບ ສະຫາຍ ຢັງກຸກ ຊອດບາທາຣ໌ (Yangug Sodbaatar), ເລຂາທິການໃຫຍ່ພັກປະຊາຊົນມົງໂກລີ (Mongolian People’s Party), ໃນໂອກາດເຂົ້າຮ່ວມກອງປະຊຸມຄະນະປະຈຳ ຂອງອົງການກອງປະຊຸມສາກົນ ຂອງບັນດາພັກການເມືອງໃນອາຊີ ຄັ້ງທີ 45 (The 45$^{th}$ Meeting of the ICAPP Standing Committee) ທີ່ ນະຄອນຫຼວງອູລານບາຕໍ, ປະເທດມົງໂກລີ. ພ້ອມດຽວກັນນັ້ນ, ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງ ພັກປະຊາຊົນມົງໂກລີ ແລະ ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດ ໃນການເປັນເຈົ້າພາບຈັດກອງປະຊຸມຄະນະປະຈຳໄອແຄັບ ຄັ້ງທີ 45. ພ້ອມນັ້ນ, ຍັງໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ມົງໂກລີ ຕະຫຼອດໄລຍະຜ່ານມາ ນັບແຕ່ການສ້າງຕັ້ງສາຍພົວພັນທາງການທູດ ໃນປີ1962 ກໍຄື ການສະໜັບສະໜູນເຊິ່ງກັນແລະກັນ ທັງໃນຂອບການຮ່ວມມືລະດັບພາກພື້ນ ແລະ ສາກົນ.

ສະຫາຍ ຢັງກຸກ ຊອດບາທາຣ໌, ໄດ້ສະແດງການຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ-ເຮັດວຽກ ທີ່ ມົງໂກລີ ຂອງຄະນະໃນຄັ້ງນີ້ ຊຶ່ງຖືເປັນການປະກອບສ່ວນເຂົ້າໃນການຮັດແໜ້ນສາຍພົວພັນມິດຕະພາບລະຫວ່າງ ສອງປະເທດ ມົງໂກລີ-ລາວ, ສະແດງອອກໃນການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນໃນລະດັບຕ່າງໆ ແລະ ການແລກປ່ຽນສານອວຍພອນເນື່ອງໃນໂອກາດສຳຄັນຕ່າງໆ. ພິເສດ, ສະຫາຍ ຍັງໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປປ ລາວ, ບັນດາຜົນງານການນຳພາຂອງພັກ ປປ ລາວ ຕະຫຼອດໄລຍະ 70 ປີ ຜ່ານມາ. ພ້ອມທັງ, ສະແດງຄວາມຍິນດີໃນການແລກປ່ຽນບົດຮຽນ ກ່ຽວກັບ ການພັດທະນາດີຈີຕອນ ແລະ ລະບົບເອເລັກໂຕຣນິກ ຂອງມົງໂກລີ ໃຫ້ແກ່ ສປປ ລາວ.

**9. ຄະນະພົວພັນຕ່າງປະເທດສູນກາງພັກ ສຳເລັດຊຸດຝຶກອົບຮົມວຽກງານຄົ້ນຄວ້າ**




ໃນວັນທີ 23-25/06/2026, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຊຸດຝຶກອົບຮົມວຽກງານຄົ້ນຄວ້າ ໃຫ້ແກ່ພະນັກງານພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມີພະນັກງານ ຈາກບັນດາອົງການອ້ອມຂ້າງສູນກາງພັກ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຫ້ອງການກະຊວງການຕ່າງປະເທດ, ສະຖາບັນການຕ່າງປະເທດ ເຂົ້າຮ່ວມຝຶກອົບຮົມໃນຄັ້ງນີ້ ລວມທັງໝົດ 30 ທ່ານ. ມີວິທະຍາກອນ 03 ທ່ານ ຈາກສູນສົ່ງເສີມວາລະສານວິທະຍາສາດ, ມະຫາວິທະຍາໄລແຫ່ງຊາດລາວ ມາຖ່າຍທອດປະສົບການ ແລະ ບົດຮຽນກ່ຽວກັບວຽກງານດັ່ງກ່າວ. ຈຸດປະສົງຂອງການຝຶກອົບຮົມຄັ້ງນີ້ ເພື່ອປະຕິບັດຕາມແຜນງານ ໂຄງການຂອງກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ ກໍຄືຂອງຄະນະພົວພັນຕ່າງປະເທດສູນກາງພັກ ແລະ ເພື່ອຍົກລະດັບຄວາມເຂົ້າໃຈ ກ່ຽວກັບ ວຽກງານຄົ້ນຄວ້າ ໂດຍສະເພາະແມ່ນ ການຄົ້ນຄວ້າວິທະຍາສາດບັນດາຫົວຂໍ້ທີ່ກ່ຽວຂ້ອງກັບວຽກງານຕົວຈິງ ຂອງບັນດາອົງການທີ່ເຂົ້າຮ່ວມຊຸດຝຶກອົບຮົມຄັ້ງນີ້.

ໃນໄລຍະຝຶກອົບຮົມ, ນັກສຳມະນາກອນ ໄດ້ແລກປ່ຽນບົດຮຽນກ່ຽວກັບວຽກຄົ້ນຄວ້າ ໃນອົງການ, ຂະແໜງການຂອງຕົນ ກັບ ວິທະຍາກອນ ຢ່າງກົງໄປກົງມາ, ເຮັດໃຫ້ນັກສຳມະນາກອນ ມີຄວາມເຂົ້າໃຈໃນວຽກຄົ້ນຄວ້າ ກໍຄືໂຄງຮ່າງການຄົ້ນຄວ້າ ໄດ້ເປັນລະບົບຫຼາຍຂຶ້ນ. ນອກຈາກນັ້ນ, ວິທະຍາກອນ ໄດ້ຊຸກຍູ້ໃຫ້ນັກສຳມະນາກອນ ສືບຕໍ່ຂຽນບົດຄົ້ນຄວ້າຕ່າງໆ ເພື່ອເຜີຍແຜ່ໃນເວັບໄຊຂອງສູນສົ່ງເສີມວາລະສານວິທະຍາສາດ ເພື່ອເປັນຖານຂໍ້ມູນທີ່ດີ ຮັບໃຊ້ສັງຄົມໃຫ້ຫຼາຍຂຶ້ນ. ໃນມື້ສຸດທ້າຍຂອງຊຸດຝຶກອົບຮົມ, ນັກສຳມະນາກອນ ໄດ້ມີການນຳສະເໜີບົດຄົ້ນຄວ້າ 04 ບົດ ຊຶ່ງວິທະຍາກອນ ໄດ້ປະກອບຄຳເຫັນ ເພື່ອປັບປຸງບັນດາບົດຄົ້ນຄວ້າດັ່ງກ່າວ ໃຫ້ສາມາດພິມເຜີຍແຜ່ໄດ້ ໃນອະນາຄົດ. ໂດຍລວມເຫັນວ່າ ຊຸດຝຶກອົບຮົມຄັ້ງນີ້ ດຳເນີນໄປ ດ້ວຍຜົນສຳເລັດຢ່າງຈົບງາມ ເພາະນອກຈາກ ຈະໄດ້ຮັບຄວາມຮູ້ຄວາມເຂົ້າໃຈ ໃນວຽກງານຄົ້ນຄວ້າແລ້ວ, ຍັງເປັນໂອກາດທີ່ດີ ໃຫ້ນັກສຳມະນາກອນ ແລະ ວິທະຍາກອນ ໄດ້ຮັດແໜ້ນຄວາມສາມັກຄີ, ສ້າງກົນໄກປະສານງານ ລະຫວ່າງ ຄຕພ ກັບບັນດາພາກສ່ວນທີ່ເຂົ້າຮ່ວມ ໃຫ້ວ່ອງໄວທັນການ.

ພາຍຫຼັງສຳເລັດຊຸດຝຶກອົບຮົມ, ທ່ານ ບຸນຍາເດດ ໄຊຍະວົງ, ກຳມະການຄະນະພັກ, ຫົວໜ້າກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ ໄດ້ມອບໃບຢັ້ງຢືນໃຫ້ບັນດາ ນັກສຳມະນາກອນ ແລະ ວິທະຍາກອນ ເພື່ອເປັນການຢັ້ງຢືນຜົນສຳເລັດການເຂົ້າຮ່ວມຊຸດຝຶກອົບຮົມດັ່ງກ່າວ.

**10. ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ເຂົ້າຮ່ວມກອງປະຊຸມສາກົນ ທີ່ ສ. ອາແຊັກໄບຊານ**






ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນໍາໂດຍ ສະຫາຍ ບຸນຍາເດດ ໄຊຍະວົງ, ຫົວໜ້າກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ, ຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະໄດ້ເຂົ້າຮ່ວມກອງປະຊຸມສາກົນ ໃນຫົວຂໍ້: ການປະກອບສ່ວນຂອງພາກພື້ນຕໍ່ຄວາມໝັ້ນຄົງຂອງໂລກ: ການສ້າງສັນຕິພາບໃນພາກພື້ນຄໍເຄຊັດສໃຕ້ ທີ່ເມືອງຊູຊາ, ສ. ອາແຊັກໄບຊານ ລະຫວ່າງວັນທີ 13-17 ມິຖຸນາ 2026.

ກອງປະຊຸມດັ່ງກ່າວ ເປັນການເຕົ້າໂຮມ ຜູ້ນໍາທາງການເມືອງ, ນັກການທູດ, ສະມາຊິກສະພາແຫ່ງຊາດ ແລະ ຕົວແທນພັກການເມືອງຈາກຫຼາຍປະເທດ ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 300 ທ່ານ ຈາກ 14 ພັກການເມືອງ ແລະ 1 ສະຖາບັນ ເພື່ອຮ່ວມກັນປຶກສາຫາລືກ່ຽວກັບ ການຟື້ນຟູຫຼັງຄວາມຂັດແຍ່ງ ແລະ ການສ້າງສາສັນຕິພາບທີ່ຍືນຍົງ. ກອງປະຊຸມປະກອບດ້ວຍ 03 ຫົວຂໍ້ຍ່ອຍຄື: 1). ກົນໄກການສ້າງສັນຕິພາບ: ການທູດດ້ານພັກ ທ່າມກາງຄວາມທ້າທາຍຂອງໂລກ; 2). ໂຄງການລະດັບພາກພື້ນ ແລະ ການຮ່ວມມືຂ້າມຊາຍແດນ: ພື້ນຖານດ້ານເສດຖະກິດຂອງສັນຕິພາບທີ່ຍືນຍົງ ແລະ 3). ການຟື້ນຟູພາຍຫຼັງຄວາມຂັດແຍ່ງ: ສິ່ງທ້າທາຍໃນປັດຈຸບັນ ຕໍ່ກັບການວາງຜັງຕົວເມືອງ.

ສະຫາຍຫົວໜ້າຄະນະຜູ້ແທນພັກ ປປ ລາວ ໄດ້ປະກອບຄໍາເຫັນໃນຫົວຂໍ້ຍ່ອຍທີ 1, ໄດ້ຕີລາຄາສູງຕໍ່ ພັກອາແຊັກໄບຊານໃໝ່ ທີ່ໄດ້ຈັດກອງປະຊຸມທີ່ມີຄວາມສໍາຄັນໃນຄັ້ງນີ້ ແລະ ຍົກໃຫ້ເຫັນບົດບາດສໍາຄັນຂອງການສ້າງກົນໄກການປຶກສາຫາລືລະດັບພາກພື້ນ, ຍົກສູງການແລກປ່ຽນທາງດ້ານວັດທະນະທໍາ-ສັງຄົມ, ການເຊື່ອມຈອດດ້ານຄົມມະນາຄົມ-ຂົນສົ່ງ, ການເພີ່ມທະວີກົນໄກການຮ່ວມມືການທູດດ້ານພັກ, ການທູດປະຊາຊົນ ແລະ ການແລກປ່ຽນການໄປມາຫາສູ່ຂອງປະຊາຊົນ, ຊຶ່ງເປັນກົນໄກສໍາຄັນໃນການເສີມສ້າງສັນຕິພາບ ແລະ ການພັດທະນາຮ່ວມກັນ. ພ້ອມດຽວກັນນັ້ນ, ໄດ້ຢໍ້າຄືນທັດສະນະ ແລະ ນະໂຍບາຍການຕ່າງປະເທດອັນສະເໝີຕົ້ນສະເໝີປາຍຂອງ ພັກປະຊາຊົນປະຕິວັດລາວ ໃນການເປີດກວ້າງການພົວພັນຮ່ວມມືກັບບັນດາພັກການເມືອງແບບຫຼາຍທິດ, ຫຼາຍຝ່າຍ ກໍຄືການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາ, ສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງຂອງພາກພື້ນ ແລະ ສາກົນ.